ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 643/ລບ

ນະຄອນຫຼວງວຽງຈັນ, ວັນທີ 25/11/24

# ດຳລັດ
# ວ່າດ້ວຍດ່ານເຂົ້າ-ອອກ ສປປ ລາວ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍວ່າດ້ວຍ ການເຂົ້າ-ອອກ ແລະ ຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ ສະບັບ ເລກທີ 59/ສພຊ, ລົງວັນທີ 26 ທັນວາ 2014;
- ອີງຕາມ ໜັງສືສະເໜີ ຂອງກະຊວງພາຍໃນ ສະບັບເລກທີ 203/ພນ, ລົງວັນທີ 16 ຕຸລາ 2024.

## ລັດຖະບານ ອອກດຳລັດ:

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດ ຫຼັກການ, ລະບຽບການ, ມາດຕະການ ກ່ຽວກັບການຄຸ້ມຄອງ ແລະ ຕິດຕາມ ກວດກາວຽກງານດ່ານເຂົ້າ-ອອກ ສປປ ລາວ ເພື່ອເຮັດໃຫ້ວຽກງານດັ່ງກ່າວມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ອຳນວຍຄວາມສະດວກໃນການ ບໍລິການ, ການແລກປ່ຽນສິນຄ້າ, ການເຂົ້າ-ອອກ ຂອງຄົນ, ຍານພາຫະນະຂົນສົ່ງ ແລະ ສິນຄ້າ, ເຄື່ອງຂອງ ໃຫ້ມີຄວາມວ່ອງໄວ ແລະ ຖືກຕ້ອງ ໂປ່ງໃສ, ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

**ມາດຕາ 2 ດ່ານເຂົ້າ-ອອກ ສປປ ລາວ**

ດ່ານເຂົ້າ-ອອກ ສປປ ລາວ ແມ່ນສະຖານທີ່ ຄວບຄຸມ, ກວດກາ ການເຂົ້າ-ອອກປະເທດ ຂອງບຸກຄົນ, ຍານພາຫະນະ ແລະ ການນຳເຂົ້າ-ສົ່ງອອກ ສິນຄ້າ, ເຄື່ອງຂອງ ທີ່ທາງການກຳນົດ ຊຶ່ງປະກອບມີ ດ່ານສາກົນ, ດ່ານທ້ອງຖິ່ນ ແລະ ດ່ານປະເພນີ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

2. ການຄຸ້ມຄອງການເຂົ້າ-ອອກ ສປປ ລາວ ໝາຍເຖິງ ການອຳນວຍຄວາມສະດວກ, ຄວບຄຸມ, ຕິດຕາມ ແລະ ກວດກາ ການເຂົ້າ-ອອກ ສປປ ລາວ;
3. ຕະຫຼາດນັດຊາຍແດນ ໝາຍເຖິງ ສະຖານທີ່ແລກປ່ຽນສິນຄ້າ ແລະ ບໍລິການ ຊຶ່ງຕັ້ງຢູ່ຂອບເຂດດ່ານຊາຍແດນ ຂອງສອງປະເທດທີ່ມີຊາຍແດນຕິດຈອດກັນ ຕາມການຕົກລົງ ຂອງສອງອົງການປົກຄອງທ້ອງຖິ່ນຂັ້ນແຂວງ ບ່ອນທີ່ດ່ານຊາຍແດນຕັ້ງຢູ່;
4 ການດຳເນີນທຸລະກິດ ຢູ່ຂອບເຂດດ່ານ ໝາຍເຖິງ ການເຊົ່າ ຫຼື ສຳປະທານ ຊັບສິນ ຂອງລັດ ເພື່ອດຳເນີນກິດຈະການຕ່າງ ເຊັ່ນ: ຮ້ານຄ້າປອດພາສີ, ທະນາຄານ, ປະກັນໄພ, ການບໍລິການ, ໂຄສະນາ ແລະ ກິດຈະການອື່ນ;
5. ດ່ານທາງບົກ ໝາຍເຖິງ ສະຖານທີ່ກວດກາການເຂົ້າ-ອອກປະເທດ ຂອງຄົນ, ຍານພາຫະນະ ທີ່ຂົນສົ່ງຜູ້ໂດຍສານ, ສິນຄ້າ, ເຄື່ອງຂອງ ຕາມເສັ້ນທາງບົກດ້ວຍລົດໂອໂຕ, ລົດພ່ວງ, ລົດລາກ, ທາງລາກລົດ ຂົນສົ່ງສະເພາະ ແລະ ລົດໄຟ ໂດຍມີການແຈ້ງເອກະສານຢ່າງຖືກຕ້ອງ, ຄົບຖ້ວນ ຕາມນິຕິກຳທີ່ໄດ້ກຳນົດໄວ້;
6. ດ່ານທາງນ້ຳ ໝາຍເຖິງ ສະຖານທີ່ກວດກາ ການເຂົ້າ-ອອກ ປະເທດ ຂອງຄົນ, ຍານພາຫະນະ ທີ່ຂົນສົ່ງຜູ້ໂດຍສານ, ສິນຄ້າ, ເຄື່ອງຂອງ ຈາກທາງບົກຫາທາງນ້ຳ ແລະ ທາງນ້ຳ ຂຶ້ນທາງບົກ ດ້ວຍເຮືອ, ເຮືອບັກ, ລົດໂອໂຕ, ລົດພ່ວງ, ລົດລາກ, ທາງລາກ ລົດຂົນສົ່ງສະເພາະ ໂດຍມີການແຈ້ງເອກະສານຢ່າງຖືກຕ້ອງ, ຄົບຖ້ວນ ຕາມນິຕິກຳທີ່ໄດ້ກຳນົດໄວ້;
7. ຄົນຕ່າງປະເທດ ໝາຍເຖິງ ຄົນທີ່ມີສັນຊາດອື່ນ ເຊິ່ງເຂົ້າມາ ສປປ ລາວ ຊົ່ວຄາວ ຫຼື ຍາວນານ ເພື່ອປະຕິບັດໜ້າທີ່ໃດໜຶ່ງ ເມື່ອໝົດກຳນົດແລ້ວ ກໍກັບຄືນ, ບຸກຄົນເຫຼົ່ານີ້ ຢູ່ພາຍໃຕ້ການຄຸ້ມຄອງ ຂອງກະຊວງການຕ່າງປະເທດ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ;
8. ຄົນຕ່າງດ້າວ ໝາຍເຖິງ ຄົນທີ່ມີສັນຊາດອື່ນ ແຕ່ເຂົ້າມາຕັ້ງຖິ່ນຖານ, ອາໄສຢູ່ ສປປ ລາວ ຍາວນານ ຖືບັດຕ່າງດ້າວ ແລະ ລັດຖະບານ ຂອງຄົນຕ່າງດ້າວນັ້ນ ກໍຍັງຮັບຮູ້ຢ່າງເປັນທາງການຢູ່;
9. ຄົນບໍ່ມີສັນຊາດ ໝາຍເຖິງ ບຸກຄົນທີ່ອາໄສຢູ່ໃນດິນແດນ ແລະ ນອກດິນແດນ ຂອງສປປ ລາວ ຊຶ່ງບໍ່ແມ່ນພົນລະເມືອງລາວ ແລະ ບໍ່ສາມາດຢັ້ງຢືນວ່າຕົນມີສັນຊາດໃດ;
10. ປະເທດໃກ້ຄຽງ ໝາຍເຖິງ ປະເທດທີ່ມີຊາຍແດນຕິດກັບ ສປປ ລາວ.

**ມາດຕາ 4 ນະໂຍບາຍຂອງລັດ ກ່ຽວກັບວຽກງານດ່ານເຂົ້າ-ອອກ ສປປ ລາວ**

ລັດສົ່ງເສີມ ແລະ ສ້າງເງື່ອນໄຂສະດວກ ໃຫ້ແກ່ການເຄື່ອນໄຫວວຽກງານຄຸ້ມຄອງດ່ານເຂົ້າ-ອອກ ສປປ ລາວ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ ດ້ວຍການປະກອບບຸກຄະລາກອນ, ສະໜອງງົບປະມານ, ສະຖານທີ່ເຮັດວຽກ, ເຮືອນພັກ, ຍານພາຫະນະ, ອຸປະກອນຮັບໃຊ້ ແລະ ສິ່ງອຳນວຍຄວາມສະດວກອື່ນ ເພື່ອຮັບປະກັນການປະຕິບັດພາລະບົດບາດສິດ ແລະ ໜ້າທີ່ ທີ່ຖືກມອບໝາຍ.

**ມາດຕາ 5 ຫຼັກການຄຸ້ມຄອງດ່ານເຂົ້າ-ອອກ ສປປ ລາວ**

ການຄຸ້ມຄອງດ່ານເຂົ້າ-ອອກ ສປປ ລາວ ຕ້ອງປະຕິບັດຕາມຫຼັກການພື້ນຖານ ດັ່ງນີ້:

1. ສອດຄ່ອງກັບກົດໝາຍ, ລະບຽບການ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ, ສົນທິສັນຍາທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ;
2. ຮັບປະກັນໃຫ້ດ່ານເຂົ້າ-ອອກ ສປປ ລາວ ເປັນເຂດທີ່ສະແດງເຖິງເອກະລັກ ຂອງຊາດ, ຂອງທ້ອງຖິ່ນ; ເປັນບ່ອນຈັດຕັ້ງປະຕິບັດນະໂຍບາຍການຕ່າງປະເທດ ຂອງສປປ ລາວ ເພື່ອດຶງດູດການລົງທຶນ, ການແລກປ່ຽນສິນຄ້າ ແລະ ການທ່ອງທ່ຽວ;
3. ຄຸ້ມຄອງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ;

4. ຮັບປະກັນວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ແລະ ປ້ອງກັນເຂດນໍ້າ, ແດນດິນ ແລະ ນ່ານຟ້າ ຂອງຊາດໄວ້ໄດ້ ຢ່າງຄົບຖ້ວນ;
5. ຮັບປະກັນການບໍລິການ ໃຫ້ມີຄວາມວ່ອງໄວ, ປອດໄພ, ໂປ່ງໃສ, ຖືກຕ້ອງ ແລະ ຍຸຕິທຳ;
6. ປະສານສົມທົບກັບຂະແໜງການ, ອົງການປົກຄອງທ້ອງຖິ່ນ, ພາກພື້ນ ແລະ ສາກົນ ໃນການຄຸ້ມຄອງວຽກງານດ່ານເຂົ້າ-ອອກ ສປປ ລາວ.

**ມາດຕາ 6 ຂອບເຂດນຳໃຊ້**

ດຳລັດສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ແລະ ພົວພັນກັບວຽກງານດ່ານເຂົ້າ-ອອກ ສປປ ລາວ.

**ມາດຕາ 7 ການຮ່ວມມືສາກົນ**

ລັດ ຊຸກຍູ້ ແລະ ສົ່ງເສີມການພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານດ່ານເຂົ້າ-ອອກ ສປປ ລາວ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ວິທະຍາສາດ, ເຕັກໂນໂລຊີ, ການຝຶກອົບຮົມຍົກລະດັບດ້ານວິຊາການ ເພື່ອພັດທະນາວຽກງານດັ່ງກ່າວ ໃຫ້ມີຄວາມເຂັ້ມແຂງ, ປະຕິບັດສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

## ພາກທີ II
## ປະເພດດ່ານ, ເງື່ອນໄຂ ການສ້າງຕັ້ງ, ຍົກ ຫຼື ຫຼຸດ ລະດັບ ແລະ ການກຳນົດວັນ, ເວລາເຮັດວຽກ ແລະ ການປິດການເຄື່ອນໄຫວ ຂອງດ່ານເຂົ້າ-ອອກ ສປປ ລາວ

### ໝວດທີ 1
### ປະເພດດ່ານເຂົ້າ-ອອກ ສປປ ລາວ

**ມາດຕາ 8 ປະເພດດ່ານເຂົ້າ-ອອກ ສປປ ລາວ**

ດ່ານເຂົ້າ-ອອກ ສປປ ລາວ ມີ 3 ປະເພດ ດັ່ງນີ້:

1. ດ່ານສາກົນ;
2. ດ່ານທ້ອງຖິ່ນ;
3. ດ່ານປະເພນີ.

**ມາດຕາ 9 ດ່ານສາກົນ**

ດ່ານສາກົນ ແມ່ນສະຖານທີ່ ທີ່ອະນຸຍາດໃຫ້ພົນລະເມືອງລາວ, ຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ສາມາດເດີນທາງເຂົ້າ-ອອກໄດ້ ຊຶ່ງປະກອບດ້ວຍດ່ານຊາຍແດນທາງບົກ, ດ່ານຊາຍແດນທາງນໍ້າ, ດ່ານສະຖານີລົດໄຟສາກົນ ແລະ ດ່ານສະໜາມບິນສາກົນ.

ສິນຄ້າທີ່ອະນຸຍາດໃຫ້ນຳເຂົ້າ-ສົ່ງອອກ ຢູ່ດ່ານສາກົນ ແມ່ນສາມາດນຳເຂົ້າ-ສົ່ງອອກ ໄດ້ທຸກປະເພດສິນຄ້າ ລວມທັງການຂົນສົ່ງສິນຄ້າຜ່ານແດນ ແລະ ການນຳເຂົ້າ ເພື່ອສົ່ງອອກ ຍົກເວັ້ນບາງສິນຄ້າ ທີ່ໄດ້ກຳນົດໄວ້ໃນລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 10 ດ່ານທ້ອງຖິ່ນ**

ດ່ານທ້ອງຖິ່ນ ແມ່ນສະຖານທີ່ ທີ່ອະນຸຍາດໃຫ້ສະເພາະພົນລະເມືອງລາວ ແລະ ພົນລະເມືອງ ຂອງປະເທດໃກ້ຄຽງ ທີ່ມີພູມລຳເນົາຖາວອນ ຢູ່ບໍລິເວນຊາຍແດນ ຂອງແຂວງທີ່ເຊື່ອມໜ້າ ສາມາດເດີນທາງເຂົ້າ-ອອກ

ຕາມການຕົກລົງຢ່າງເປັນທາງການ ຂອງສອງຝ່າຍ ຊຶ່ງປະກອບດ້ວຍ ດ່ານຊາຍແດນທາງບົກ ແລະ ດ່ານຊາຍແດນທາງນ້ຳ.

ເຄື່ອງຂອງທີ່ສາມາດນຳເຂົ້າ-ອອກ ຢູ່ດ່ານທ້ອງຖິ່ນ ແມ່ນປະເພດນຳໃຊ້ ເພື່ອການບໍລິໂພກພາຍໃນຄົວເຮືອນ ແລະ ຮັບໃຊ້ການຜະລິດ.

ສຳລັບສິນຄ້າ ທີ່ມີຈຸດປະສົງທາງດ້ານການຄ້າ ທີ່ຈະນຳເຂົ້າ-ອອກ ດ່ານທ້ອງຖິ່ນ ຂອງປະຊາຊົນທ້ອງຖິ່ນ ຂອບເຂດສອງແຂວງ ທີ່ດ່ານຊາຍແດນຕັ້ງຢູ່ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 11 ດ່ານປະເພນີ**

ດ່ານປະເພນີ ແມ່ນດ່ານທີ່ອະນຸຍາດໃຫ້ສະເພາະພົນລະເມືອງລາວ ແລະ ພົນລະເມືອງ ຂອງປະເທດໃກ້ຄຽງ ທີ່ມີພູມລຳເນົາຖາວອນ ຢູ່ບໍລິເວນຊາຍແດນ ຂອງເມືອງທີ່ເຊິ່ງໜ້າ ເດີນທາງເຂົ້າ-ອອກໄດ້ ຕາມການຕົກລົງຂອງສອງຝ່າຍ ຊຶ່ງປະກອບດ້ວຍ ດ່ານຊາຍແດນປະເພນີທາງບົກ ແລະ ດ່ານຊາຍແດນປະເພນີທາງນ້ຳ.

ເຄື່ອງຂອງທີ່ສາມາດນຳເຂົ້າ-ອອກ ຢູ່ດ່ານປະເພນີ ແມ່ນປະເພດນຳໃຊ້ ເພື່ອການບໍລິໂພກພາຍໃນຄົວເຮືອນ ແລະ ຮັບໃຊ້ການຜະລິດ.

ສຳລັບສິນຄ້າ ທີ່ມີຈຸດປະສົງທາງດ້ານການຄ້າ ທີ່ຈະນຳເຂົ້າ-ອອກ ດ່ານທ້ອງຖິ່ນ ຂອງປະຊາຊົນທ້ອງຖິ່ນ ຂອບເຂດ ສອງເມືອງ ທີ່ດ່ານຊາຍແດນຕັ້ງຢູ່ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ໝວດທີ 2
## ເງື່ອນໄຂ ການສ້າງຕັ້ງ, ຍົກ ຫຼື ຫຼຸດ ລະດັບ ດ່ານເຂົ້າ-ອອກ ສປປ ລາວ

**ມາດຕາ 12 ເງື່ອນໄຂການສ້າງຕັ້ງດ່ານເຂົ້າ-ອອກ ສປປ ລາວ**

1. ເປັນນະໂຍບາຍ ຂອງພັກ ແລະ ລັດຖະບານ;
2. ການສ້າງຕັ້ງແຕ່ລະປະເພດດ່ານ ຕ້ອງຕິດກັບຊາຍແດນ ແລະ ບົນພື້ນຖານຄວາມເປັນເອກະພາບກັບປະເທດທີ່ມີຊາຍແດນຕິດຈອດກັນ(ຍົກເວັ້ນດ່ານສະໜາມບິນສາກົນ);
3. ສະຖານະ ຂອງດ່ານແຕ່ລະປະເພດ ທີ່ຈະສ້າງຕັ້ງ ຕ້ອງສົມຄູ່ກັບດ່ານເຊິ່ງໜ້າ ຂອງປະເທດຮ່ວມຊາຍແດນ;
4. ການສ້າງຕັ້ງດ່ານ ແຕ່ລະປະເພດ ຕ້ອງບົນພື້ນຖານມີຈຳນວນພະນັກງານຄຸ້ມຄອງຕາມສາຍວິຊາສະເພາະຢ່າງພຽງພໍ ແລະ ຄວາມສາມາດການສະໜອງງົບປະມານ ຂອງລັດຖະບານ ໃນການສ້າງພື້ນຖານໂຄງລ່າງ ຂອງແຕ່ລະປະເພດດ່ານ ຕາມມາດຖານທີ່ກຳນົດໄວ້ ໃນດຳລັດສະບັບນີ້;
5. ຜ່ານການປະເມີນເຫັນວ່າ ຜູ້ໂດຍສານ, ຍານພາຫະນະ ແລະ ບໍລິມາດສິນຄ້າ ເຄື່ອງຂອງ ທີ່ຈະມີການແລກປ່ຽນຢູ່ຂອບເຂດດ່ານ ມີຈຳນວນເໝາະສົມ ທີ່ຈະສ້າງຕັ້ງດ່ານ;
6. ໄດ້ຮັບການຕົກລົງຈາກລັດຖະບານ.

**ມາດຕາ 13 ເງື່ອນໄຂການ ຍົກ ຫຼື ຫຼຸດ ລະດັບດ່ານເຂົ້າ-ອອກ ສປປ ລາວ**

ເງື່ອນໄຂໃນການຍົກລະດັບແຕ່ລະປະເພດດ່ານ ໃຫ້ປະຕິບັດຕາມ ມາດຕາ 12 ຂອງດຳລັດສະບັບນີ້. ນອກນັ້ນ, ຖານະ ຂອງດ່ານທີ່ຈະຍົກລະດັບ ຕ້ອງມີຖານະຕ່ຳກວ່າດ່ານເຊິ່ງໜ້າ ຂອງປະເທດຮ່ວມຊາຍແດນ.

ເງື່ອນໄຂໃນການຫຼຸດລະດັບແຕ່ລະປະເພດດ່ານ ໃຫ້ປະຕິບັດຕາມ ມາດຕາ 12 ຂອງດຳລັດສະບັບນີ້. ນອກນັ້ນ, ຖານະ ຂອງດ່ານທີ່ຈະຫຼຸດລະດັບ ຕ້ອງມີຖານະສູງກວ່າດ່ານເຊິ່ງໜ້າ ຂອງປະເທດຮ່ວມຊາຍແດນ.

## ໝວດທີ 3
## ການສ້າງຕັ້ງ, ຍົກ ຫຼື ຫຼຸດ ລະດັບ ດ່ານເຂົ້າ-ອອກ ສປປ ລາວ

### ມາດຕາ 14 ການສ້າງຕັ້ງດ່ານສາກົນ

ອົງການປົກຄອງທ້ອງຖິ່ນ ທີ່ມີຈຸດປະສົງຢາກສ້າງຕັ້ງດ່ານ ຕ້ອງຄົ້ນຄວ້າລະອຽດ ແລ້ວສະເໜີຫາກະຊວງການຕ່າງປະເທດ ເພື່ອສຶກສາຄວາມເປັນໄປໄດ້ໃນການສ້າງຕັ້ງດ່ານ, ກະຊວງການຕ່າງປະເທດ ສົມທົບກັບອົງການປົກຄອງທ້ອງຖິ່ນ ທີ່ສະເໜີສ້າງຕັ້ງດ່ານ ແລະ ບັນດາຂະແໜງການ ເປັນຕົ້ນ: ປ້ອງກັນປະເທດ, ປ້ອງກັນຄວາມສະຫງົບ, ການເງິນ, ໂຍທາທິການ-ຂົນສົ່ງ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ເພື່ອເກັບກໍາຂໍ້ມູນ, ສ້າງບົດວິພາກເສດຖະກິດ-ເຕັກນິກ, ແຜນຄວາມຕ້ອງການທາງດ້ານງົບປະມານ, ຈໍານວນພະນັກງານວິຊາສະເພາະ, ຄາດຄະເນ ຈໍານວນຜູ້ໂດຍສານ, ຍານພາຫະນະ ແລະ ຈໍານວນສິນຄ້າ ເຄື່ອງຂອງ ທີ່ຈະສົ່ງອອກ- ນໍາເຂົ້າ ຢູ່ດ່ານດັ່ງກ່າວ, ສ້າງບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມທໍາມະຊາດ ແລະ ສັງຄົມ ແລ້ວລາຍງານຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ເພື່ອຂໍຄໍາເຫັນຊີ້ນໍາ ຈາກລັດຖະບານ.

ເມື່ອໄດ້ຮັບການຕົກລົງເຫັນດີຈາກລັດຖະບານ, ກະຊວງການຕ່າງປະເທດ ສົມທົບກັບຂະແໜງການທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ດໍາເນີນການເຈລະຈາ ກັບລັດຖະບານ ຂອງປະເທດທີ່ຮ່ວມຊາຍແດນ. ພາຍຫຼັງໄດ້ຮັບເອກະສານເຫັນດີຈາກປະເທດຮ່ວມຊາຍແດນ, ກະຊວງການຕ່າງປະເທດ ແຈ້ງໃຫ້ກະຊວງໂຍທາທິການ ແລະ ຂົນສົ່ງ ປະສານກັບອົງການປົກຄອງທ້ອງຖິ່ນ ດໍາເນີນການສໍາຫຼວດອອກແບບ ແລະ ຂຶ້ນແຜນ ງົບປະມານ ເພື່ອສະເໜີລັດຖະບານ ພິຈາລະນາຕົກລົງ ໃນການກໍ່ສ້າງດ່ານສາກົນ.

ອົງການປົກຄອງທ້ອງຖິ່ນ ຂັ້ນແຂວງ ປຶກສາຫາລື ກັບ ອົງການປົກຄອງທ້ອງຖິ່ນ ຂອງປະເທດທີ່ມີຊາຍແດນຮ່ວມກັນ ເພື່ອກະກຽມພິທີການເປີດດ່ານ ຢ່າງເປັນທາງການ.

ສໍາລັບການສ້າງຕັ້ງ ດ່ານສະຖານີລົດໄຟສາກົນ ແລະ ດ່ານສະໜາມບິນສາກົນ ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການ ກ່ຽວຂ້ອງ.

### ມາດຕາ 15 ການສ້າງຕັ້ງດ່ານ ທ້ອງຖິ່ນ ແລະ ປະເພນີ

ອົງການປົກຄອງທ້ອງຖິ່ນ ທີ່ມີຈຸດປະສົງຢາກສ້າງຕັ້ງດ່ານ ຕ້ອງຄົ້ນຄວ້າລະອຽດ ແລະ ສະເໜີຫາກະຊວງການຕ່າງປະເທດ ເພື່ອສຶກສາຄວາມເປັນໄປໄດ້ໃນການສ້າງຕັ້ງດ່ານ, ກະຊວງການຕ່າງປະເທດ ສົມທົບກັບອົງການປົກຄອງຂັ້ນແຂວງ ແລະ ຂັ້ນເມືອງ ທີ່ມີຈຸດປະສົງຢາກສ້າງຕັ້ງດ່ານທ້ອງຖິ່ນ ແລະ ດ່ານປະເພນີ ແລະ ບັນດາຂະແໜງການທີ່ກ່ຽວຂ້ອງ ເຊັ່ນ: ປ້ອງກັນປະເທດ, ປ້ອງກັນຄວາມສະຫງົບ, ການເງິນ, ຂະແໜງການອື່ນທີ່ກ່ຽວຂ້ອງ ລົງເກັບກໍາຂໍ້ມູນ, ສ້າງບົດວິພາກເສດຖະກິດເຕັກນິກແຜນຄວາມຕ້ອງການທາງດ້ານງົບປະມານ, ຈໍານວນພະນັກງານວິຊາສະເພາະ, ຄາດຄະເນຈໍານວນຜູ້ໂດຍສານ, ຍານພາຫະນະ ແລະ ຈໍານວນສິນຄ້າ ເຄື່ອງຂອງ ທີ່ຈະສົ່ງອອກ-ນໍາເຂົ້າ ຢູ່ດ່ານດັ່ງກ່າວ, ສ້າງບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມທໍາມະຊາດ ແລະ ສັງຄົມ ແລ້ວລາຍງານຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ເພື່ອຂໍຄໍາເຫັນຊີ້ນໍາ ຈາກລັດຖະບານ.

ເມື່ອໄດ້ຮັບການຕົກລົງເຫັນດີ ຈາກລັດຖະບານ, ກະຊວງການຕ່າງປະເທດ ສົມທົບກັບ ຂະແໜງການທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ດໍາເນີນການເຈລະຈາ ກັບລັດຖະບານ ຂອງປະເທດທີ່ຮ່ວມຊາຍແດນ.

ພາຍຫຼັງທີ່ໄດ້ຮັບເອກະສານເຫັນດີ ຈາກປະເທດທີ່ຮ່ວມຊາຍແດນ, ກະຊວງການຕ່າງປະເທດ ແຈ້ງໃຫ້ອົງການປົກຄອງທ້ອງຖິ່ນ ຊີ້ນໍາພະແນກໂຍທາທິການ ແລະ ຂົນສົ່ງ ດໍາເນີນການສໍາຫຼວດອອກແບບ ແລະ ຂຶ້ນແຜນງົບປະມານ ເພື່ອສະເໜີລັດຖະບານ ພິຈາລະນາຕົກລົງໃນການກໍ່ສ້າງດ່ານ.

ພາຍຫຼັງໄດ້ຮັບການເຫັນດີ ຈາກລັດຖະບານ, ອົງການປົກຄອງທ້ອງຖິ່ນຂັ້ນແຂວງ ດຳເນີນການປຶກສາຫາລື ກັບອົງການປົກຄອງທ້ອງຖິ່ນຂັ້ນແຂວງ ຂອງປະເທດຮ່ວມຊາຍແດນ ກ່ຽວກັບການສ້າງຕັ້ງ ແລະ ການເປີດດ່ານທ້ອງຖິ່ນ ຢ່າງເປັນທາງການ.

ມອບໃຫ້ອົງການປົກຄອງທ້ອງຖິ່ນຂັ້ນເມືອງ ປຶກສາຫາລືກັບ ອົງການປົກຄອງທ້ອງຖິ່ນຂັ້ນເມືອງ ຂອງປະເທດຮ່ວມຊາຍແດນ ກະກຽມພິທີການເປີດດ່ານປະເພນີ ຢ່າງເປັນທາງການ.

**ມາດຕາ 16 ການຍົກ ຫຼື ຫຼຸດ ລະດັບດ່ານເຂົ້າ-ອອກ ສປປ ລາວ**

ການສະເໜີຂໍຍົກລະດັບ ຫຼື ຫຼຸດລະດັບ ແຕ່ລະປະເພດດ່ານ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 14 ແລະ 15 ຂອງດຳລັດສະບັບນີ້.

## ໝວດທີ 4
## ກຳນົດວັນ, ເວລາເຮັດວຽກ ແລະ ການປິດ
## ການເຄື່ອນໄຫວ ຂອງດ່ານເຂົ້າ-ອອກ ສປປ ລາວ

**ມາດຕາ 17 ການກຳນົດ ວັນ ແລະ ເວລາ ເຮັດວຽກ ຂອງດ່ານເຂົ້າ-ອອກ ສປປ ລາວ**

ການກຳນົດ ວັນ ແລະ ເວລາ ເຮັດວຽກ ຂອງດ່ານສາກົນ ຕ້ອງສອດຄ່ອງກັບ ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ; ບົນພື້ນຖານການຕົກລົງເປັນເອກະພາບ ຮ່ວມກັບປະເທດທີ່ມີຊາຍແດນຕິດຈອດກັບປະເທດເຮົາ.

ການກຳນົດ ວັນ ແລະ ເວລາ ເຮັດວຽກ ຂອງດ່ານທ້ອງຖິ່ນ ແລະ ປະເພນີ ແມ່ນການຕົກລົງຮ່ວມກັນ ຂອງອົງການປົກຄອງທ້ອງຖິ່ນ ຂັ້ນແຂວງ ຂອງສອງປະເທດທີ່ມີຊາຍແດນຕິດຈອດກັນ ບົນພື້ນຖານການເຫັນດີ ຂອງລັດຖະບານ.

ກໍລະນີສຸກເສີນ ທີ່ພົວພັນເຖິງຄວາມໝັ້ນຄົງ ແລະ ຄວາມປອດໄພແຫ່ງຊາດ, ການນຳຈັບອາດຊະຍາກຳຂ້າມຊາດ, ໄພທຳມະຊາດ, ການຊ່ວຍເຫຼືອຄົນເຈັບກະທັນຫັນ ຫຼື ກໍລະນີສຸກເສີນອື່ນ, ຄະນະຄຸ້ມຄອງດ່ານ ສາມາດເປີດການເຮັດວຽກນອກໂມງການ ທີ່ກຳນົດ, ພ້ອມທັງ ລາຍງານທັນທີທັນໃດ ໃຫ້ກະຊວງປ້ອງກັນຄວາມສະຫງົບ ແລະ ອົງການປົກຄອງທ້ອງຖິ່ນ ຮັບຊາບ.

**ມາດຕາ 18 ການປິດການເຄື່ອນໄຫວຊົ່ວຄາວ ຂອງດ່ານ**

ການປິດການເຄື່ອນໄຫວຊົ່ວຄາວ ຂອງດ່ານ ແມ່ນໃນກໍລະນີມີເຫດຈຳເປັນສຸກເສີນຕ່າງໆ ທາງດ້ານວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ໄພທຳມະຊາດ, ພະຍາດຕິດຕໍ່ ຫຼື ເຫດຜົນອື່ນໆ ຫຼື ຕາມການສະເໜີ ຂອງປະເທດຮ່ວມຊາຍແດນ, ສິດອຳນາດໃນການຕົກລົງ ໃຫ້ປະຕິບັດ ດັ່ງນີ້:

1. ນາຍົກລັດຖະມົນຕີ ຕົກລົງປິດການເຄື່ອນໄຫວຊົ່ວຄາວ ຂອງດ່ານສາກົນ ຕາມການຄົ້ນຄວ້າສະເໜີ ຂອງກະຊວງປ້ອງກັນຄວາມສະຫງົບ ພາຍຫຼັງໄດ້ເປັນເອກະພາບກັບເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ບ່ອນທີ່ດ່ານຊາຍແດນຕັ້ງຢູ່;
2. ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ມີສິດຕົກລົງປິດການເຄື່ອນໄຫວຊົ່ວຄາວ ຂອງດ່ານທ້ອງຖິ່ນ ແລະ ດ່ານປະເພນີ ຕາມການຄົ້ນຄວ້າສະເໜີ ຂອງກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນແຂວງ ພາຍຫຼັງທີ່ໄດ້ ເປັນເອກະພາບກັບເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ບ່ອນທີ່ດ່ານທ້ອງຖິ່ນ ແລະ ປະເພນີ ຕັ້ງຢູ່ ແລ້ວລາຍງານໃຫ້ ລັດຖະບານ ຮັບຊາບ;

3. ການໂຈະການເຄື່ອນໄຫວຊົ່ວຄາວ ຂອງດ່ານເກີນ 30 ວັນຂຶ້ນໄປ, ໃນເວລາຈະເປີດ ການເຄື່ອນໄຫວດ່ານຄືນໃໝ່ ຕ້ອງດຳເນີນຕາມຂັ້ນຕອນການສ້າງຕັ້ງດ່ານ ຕາມທີ່ໄດ້ກຳນົດໄວ້ ໃນມາດຕາ 14 ແລະ 15 ຂອງ ດຳລັດສະບັບນີ້.

## ພາກທີ III
## ມາດຕະຖານດ່ານເຂົ້າ-ອອກ ສປປ ລາວ
## ໝວດທີ 1
## ມາດຕະຖານດ່ານສາກົນ

### ມາດຕາ 19 ມາດຕະຖານດ່ານສາກົນທາງບົກ

ມາດຕະຖານດ່ານສາກົນທາງບົກ ມີດັ່ງນີ້:

1. ຕັ້ງຢູ່ເຂດທີ່ເປັນຈຸດຍຸດທະສາດ ແລະ ແລວທາງເສດຖະກິດທີ່ສຳຄັນ ຂອງປະເທດ;
2. ເນື້ອທີ່ຕ່ຳສຸດບໍ່ໃຫ້ຫຼຸດ 3 ເຮັກຕາ ໃນນັ້ນບໍ່ລວມເອົາເນື້ອທີ່ເຂດທຸລະກິດ ແລະ ບໍລິການຕ່າງໆ;
3. ແຜນຜັງລວມ ແລະ ແຜນຜັງລະອຽດ ຊຶ່ງໄດ້ຜ່ານການເຫັນດີ ແລະ ຮັບຮອງ ຈາກກະຊວງໂຍທາທິການ ແລະ ຂົນສົ່ງ;
4. ອາຄານເຮັດວຽກ ແລະ ໃຫ້ການບໍລິການ ທີ່ເໝາະສົມ, ມີຮູບແບບທີ່ເປັນເອກະລັກ ຂອງຊາດ ແລະ ທ້ອງຖິ່ນ ຊຶ່ງມີລະບົບອາຄານປະກອບດ້ວຍ: ຫ້ອງການຕຳຫຼວດກວດຄົນເຂົ້າ-ອອກເມືອງ, ຫ້ອງການພາສີ; ຫ້ອງການກັກກັນ (ພືດ, ສັດ ແລະ ປ່າໄມ້; ອາຫານ ແລະ ຢາ-ຄວບຄຸມພະຍາດຕິດຕໍ່; ຢັ້ງຢືນຄວາມຖືກຕ້ອງ ຂອງນ້ຳມັນເຊື້ອໄຟ, ກວດສອບຄຸນນະພາບຜະລິດຕະພັນ-ສິນຄ້າ); ຫ້ອງການບໍລິຫານ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ ຢ່າງຄົບຖ້ວນ;
5. ຊ່ອງທາງຈາລະຈອນເຂົ້າ ອອກ ໃນແຕ່ລະເບື້ອງ ຂອງອາຄານຢ່າງໜ້ອຍ ສາມຊ່ອງທາງ ເພື່ອຄົນຍ່າງ, ຍານພາຫະນະ ແລະ ສຸກເສີນ;
6. ສາງໃນຮົ່ມ ແລະ ສາງກາງແຈ້ງ ສຳລັບເກັບຮັກສາສິນຄ້າ, ເຄື່ອງຂອງ ຂາເຂົ້າ-ຂາອອກ;
7. ລານກວດກາຍານພາຫະນະຂົນສົ່ງສິນຄ້າ, ເຄື່ອງຂອງ, ພືດ, ສັດ, ອາຫານ, ຢາ ແລະ ຜະລິດຕະພັນການແພດ ຂາເຂົ້າ-ຂາອອກ;
8. ຫ້ອງທົດລອງສຳລັບຂະແໜງ ສາທາລະນະສຸກ ແລະ ກະສິກຳ ແລະ ປ່າໄມ້;
9. ສະຖານທີ່ຈອດຍານພາຫະນະ ຂອງເຈົ້າໜ້າທີ່, ພະນັກງານປະຈຳດ່ານ ແລະ ສະຖານທີ່ຈອດຍານພາຫະນະ ທົ່ວໄປ;
10. ສະຖານທີ່ ຊັ່ງນ້ຳໜັກ ແລະ ກວດກາດ້ວຍເຄື່ອງສາຍລັງສີ;
11. ຫ້ອງຄວບຄຸມທີ່ມີຫ້ອງນ້ຳສຳລັບຜູ້ມີອາການຕິດພະຍາດລະບາດ ແລະ ຫ້ອງກັກຜູ້ຕ້ອງສົງໄສຄະດີ;
12. ອາຄານສຳລັບຄວບຄຸມ ອັກຄີໄພ, ມອດໄຟ, ໄຟຟ້າ ແລະ ເຄື່ອງຈັກໄຟຟ້າສຳຮອງ;
13. ຫ້ອງນ້ຳສາທາລະນະ, ລະບົບລະບາຍນ້ຳ, ປ້ອມຍາມຂາເຂົ້າ-ຂາອອກ, ເຂດສີຂຽວ ແລະ ສວນດອກໄມ້, ສະຖານທີ່ເກັບມ້ຽນຂີ້ເຫຍື້ອ;
14. ປະຕູໂຂງທີ່ເປັນເອກະລັກ ຂອງຊາດ ແລະ ອ້ອມຮອບດ້ວຍຮົ້ວບໍລິເວນຂອບເຂດ ຂອງດ່ານ.

### ມາດຕາ 20 ມາດຕະຖານດ່ານສາກົນທາງນ້ຳ

ມາດຕະຖານດ່ານສາກົນທາງນ້ຳ ມີດັ່ງນີ້:

1. ຕັ້ງຢູ່ເຂດທີ່ເປັນຈຸດຍຸດທະສາດ ແລະ ແລວທາງເສດຖະກິດ ທີ່ສຳຄັນ ຂອງປະເທດ;

2. ເນື້ອທີ່ຕໍ່າສຸດບໍ່ໃຫ້ຫຼຸດ 3 ເຮັກຕາ ໃນນັ້ນບໍ່ລວມເອົາເນື້ອທີ່ເຂດທຸລະກິດ ແລະ ບໍລິການຕ່າງໆ;
3. ແຜນຜັງລວມ ແລະ ແຜນຜັງລະອຽດ ຊຶ່ງໄດ້ຜ່ານການເຫັນດີ ແລະ ຮັບຮອງຈາກກະຊວງໂຍທາທິການ ແລະ ຂົນສົ່ງ;
4. ອອກແບບອາຄານແຕ່ໜຶ່ງຫາ ຫຼາຍຊັ້ນ ຕາມຄວາມເໝາະສົມ, ມີຮູບແບບເປັນເອກະລັກ ຂອງຊາດ ແລະ ທ້ອງຖິ່ນ;
5. ມີປະຕູໂຂງທີ່ເປັນເອກະລັກ ຂອງຊາດ ແລະ ຮົ້ວລ້ອມບໍລິເວນຂອບເຂດ ຂອງດ່ານ;
6. ມີລະບົບອາຄານປະກອບດ້ວຍ: ຫ້ອງການຕໍາຫຼວດກວດຄົນເຂົ້າ-ອອກເມືອງ; ຫ້ອງການພາສີ; ຫ້ອງການກັກກັນ (ພືດ, ສັດ ແລະ ປ່າໄມ້; ອາຫານ ແລະ ຢາ-ຄວບຄຸມພະຍາດຕິດຕໍ່; ຢັ້ງຢືນຄວາມຖືກຕ້ອງ ຂອງນໍ້າມັນເຊື້ອໄຟ, ກວດສອບຄຸນນະພາບຜະລິດຕະພັນ-ສິນຄ້າ); ຫ້ອງການບໍລິຫານ ແລະ ສິ່ງອໍານວຍຄວາມສະດວກຕ່າງໆ ຢ່າງຄົບຖ້ວນ;
7. ຊ່ອງທາງຈາລະຈອນປ່ອຍລົດເຂົ້າ-ອອກ, ຫ້ອງການທ່າເຮືອໃນແຕ່ລະເບື້ອງ ຂອງອາຄານລວມ ຢ່າງໜ້ອຍ ສາມຊ່ອງທາງຈາລະຈອນ ສໍາລັບຄົນຍ່າງ, ຍານພາຫະນະຂົນສົ່ງໂດຍສານ, ທ່ອງທ່ຽວ, ຂົນສົ່ງສິນຄ້າ, ພິເສດ ແລະ ສຸກເສີນ;
8. ທາງຂຶ້ນ-ລົງທ່າເຮືອ ຢ່າງໜ້ອຍ ສອງຊ່ອງທາງ ສໍາລັບຍານພາຫະນະຂົນສົ່ງສິນຄ້າ, ມີລົດຍົກເຄື່ອນທີ່ ຫຼື ເຄື່ອງຍົກສິນຄ້າ, ມີຂັ້ນໄດ ຂຶ້ນ-ລົງ ທາ ເຮືອ ສໍາລັບຜູ້ໂດຍສານ ແລະ ທ່ອງທ່ຽວ;
9. ມີສາງໃນຮົ່ມ ແລະ ກາງແຈ້ງ ສໍາລັບເກັບຮັກສາສິນຄ້າຂາເຂົ້າ-ອອກ;
10. ລານກວດກາລົດສິນຄ້າ, ພືດ, ສັດ, ອາຫານ, ຢາ ແລະ ຜະລິດຕະພັນການແພດ ຂາເຂົ້າ-ຂາອອກ ແລະ ວັດຖຸອັນຕະລາຍ;
11. ສະຖານທີ່ຊັ່ງນໍ້າໜັກ ແລະ ເຄື່ອງກວດສ່ອງລັງສີ;
12. ຫ້ອງຄວບຄຸມທີ່ມີຫ້ອງນໍ້າສໍາລັບຜູ້ມີອາການຕິດພະຍາດລະບາດ ແລະ ຫ້ອງກັກຜູ້ຕ້ອງສົງໄສຄະດີ;
13. ອາຄານມອດໄຟ, ຄວບຄຸມໄຟຟ້າ ແລະ ເຄື່ອງຈັກໄຟຟ້າສໍາຮອງ;
14. ຫ້ອງນໍ້າສາທາລະນະ, ລະບົບລະບາຍນໍ້າ, ປ້ອມຍາມຂາເຂົ້າ-ຂາອອກ, ເຂດສີຂຽວ, ສວນດອກໄມ້ ແລະ ສະຖານທີ່ເກັບມ້ຽນຂີ້ເຫຍື້ອ;
15. ສະຖານທີ່ຈອດຍານພາຫະນະ ຂອງເຈົ້າໜ້າທີ່, ພະນັກງານປະຈໍາດ່ານ ແລະ ສະຖານທີ່ຈອດຍານພາຫະນະທົ່ວໄປ.

**ມາດຕາ 21 ມາດຕະຖານດ່ານສະຖານີລົດໄຟສາກົນ**

ມາດຕະຖານດ່ານສະຖານີລົດໄຟສາກົນ ມີດັ່ງນີ້:

1. ຕັ້ງຢູ່ເຂດທີ່ເປັນຈຸດຍຸດທະສາດ ແລະ ແລວທາງເສດຖະກິດສໍາຄັນ ຂອງປະເທດ;
2. ເນື້ອທີ່ ແຕ່ 24 ເຮັກຕາ ຫາ 150 ເຮັກຕາ ໃນນັ້ນ ບໍ່ລວມເອົາເນື້ອທີ່ເຂດທຸລະກິດ ແລະ ບໍລິການຕ່າງໆ;
3. ແຜນຜັງລວມ ແລະ ແຜນຜັງລະອຽດ ຊຶ່ງໄດ້ຜ່ານການເຫັນດີ ແລະ ຮັບຮອງຈາກກະຊວງໂຍທາທິການ ແລະ ຂົນສົ່ງ;
4. ອອກແບບອາຄານແຕ່ໜຶ່ງຊັ້ນ ຫາ ຫຼາຍຊັ້ນຕາມຄວາມເໝາະສົມ, ມີຮູບແບບ ທີ່ເປັນເອກະລັກ ຂອງຊາດ ແລະ ຂອງທ້ອງຖິ່ນ;
5. ລະບົບອາຄານປະກອບດ້ວຍ: ຫ້ອງການຕໍາຫຼວດກວດຄົນເຂົ້າ-ອອກເມືອງ; ຫ້ອງການພາສີ; ຫ້ອງການກັກກັນ (ພືດ, ສັດ ແລະ ປ່າໄມ້; ອາຫານ ແລະ ຢາ-ຄວບຄຸມພະຍາດຕິດຕໍ່; ຢັ້ງຢືນຄວາມຖືກຕ້ອງ ຂອງນໍ້າມັນເຊື້ອໄຟ, ກວດສອບຄຸນນະພາບຜະລິດຕະພັນ-ສິນຄ້າ), ຫ້ອງການບໍລິຫານ ແລະ ສິ່ງອໍານວຍຄວາມສະດວກ ຢ່າງຄົບຖ້ວນ;

6. ຊ່ອງທາງຈາລະຈອນ ປ່ອຍລົດເຂົ້າ-ອອກ ໃນແຕ່ລະເບື້ອງ ຂອງອາຄານ ຢ່າງໜ້ອຍ ໃຫ້ມີສາມຊ່ອງທາງຈາລະຈອນສໍາລັບຄົນຍ່າງ, ຍານພາຫະນະໂດຍສານ, ທ່ອງທ່ຽວ, ຂົນສົ່ງສິນຄ້າ, ພິເສດ ແລະ ສຸກເສີນ;
7. ສາງໃນຮົ່ມ ແລະ ສາງກາງແຈ້ງ ສໍາລັບເກັບຮັກສາສິນຄ້າ, ພິເສດ ແລະ ສຸກເສີນ;
8. ລານກວດກາຍານພາຫະນະຂົນສົ່ງສິນຄ້າ, ເຄື່ອງຂອງ, ພືດ, ສັດ, ອາຫານ, ປາ ແລະ ຜະລິດຕະພັນການແພດ ຂາເຂົ້າ-ຂາອອກ;
9. ຫ້ອງທົດລອງສໍາລັບຂະແໜງສາທາລະນະສຸກ ແລະ ກະສິກໍາປ່າໄມ້;
10. ສະຖານທີ່ຈອດຍານພາຫະນະ ຂອງເຈົ້າໜ້າທີ່, ພະນັກງານປະຈໍາດ່ານ ແລະ ສະຖານທີ່ຈອດຍານພາຫະນະທົ່ວໄປ;
11. ສະຖານທີ່ຊັ່ງນໍ້າໜັກ ແລະ ເຄື່ອງກວດສ່ອງລັງສີ;
12. ຫ້ອງຄວບຄຸມທີ່ມີຫ້ອງນໍ້າສໍາລັບຜູ້ມີອາການຕິດພະຍາດລະບາດ ແລະ ຫ້ອງກັກຜູ້ຕ້ອງສົງໄສຄະດີ;
13. ອາຄານມອດໄຟ, ຄວບຄຸມໄຟຟ້າ ແລະ ເຄື່ອງຈັກໄຟຟ້າສໍາຮອງ;
14. ຫ້ອງນໍ້າສາທາລະນະ, ລະບົບລະບາຍນໍ້າ, ປ້ອມຍາມຂາເຂົ້າ-ຂາອອກ, ເຂດສີຂຽວ ແລະ ສວນດອກໄມ້, ສະຖານທີ່ເກັບມ້ຽນຂີ້ເຫຍື້ອ;
15. ປະຕູໂຂງທີ່ເປັນເອກະລັກ ຂອງຊາດ ແລະ ອ້ອມຮອບດ້ວຍຮົ້ວບໍລິເວນຂອບເຂດ ຂອງດ່ານຊາຍແດນ.

**ມາດຕາ 22 ມາດຕະຖານດ່ານສະໜາມບິນສາກົນ**

ມາດຕະຖານ ດ່ານສະໜາມບິນສາກົນ ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 2
## ມາດຕະຖານດ່ານທ້ອງຖິ່ນ

**ມາດຕາ 23 ມາດຕະຖານດ່ານທ້ອງຖິ່ນທາງບົກ**

ມາດຕະຖານດ່ານທ້ອງຖິ່ນທາງບົກ ມີດັ່ງນີ້:

1. ຕັ້ງຢູ່ເຂດພັດທະນາເສດຖະກິດທີ່ສໍາຄັນ ລະຫວ່າງແຂວງທີ່ມີຊາຍແດນຕິດຈອດກັບປະເທດເພື່ອນບ້ານ;
2. ເນື້ອທີ່ຕໍ່າສຸດ 3 ເຮັກຕາ ໃນນັ້ນບໍ່ລວມເອົາເນື້ອທີ່ເຂດທຸລະກິດ ແລະ ບໍລິການຕ່າງໆ;
3. ແຜນຜັງລວມ ແລະ ແຜນຜັງລະອຽດ ຊຶ່ງໄດ້ຜ່ານການເຫັນດີ ແລະ ຮັບຮອງຈາກພະແນກໂຍທາທິການ ແລະ ຂົນສົ່ງ ຂັ້ນແຂວງ;
4. ອາຄານເຮັດວຽກ ແລະ ໃຫ້ການບໍລິການ ທີ່ເໝາະສົມ, ມີຮູບແບບທີ່ເປັນເອກະລັກ ຂອງຊາດ ແລະ ທ້ອງຖິ່ນ ຊຶ່ງມີລະບົບອາຄານປະກອບດ້ວຍ: ຫ້ອງການຕໍາຫຼວດກວດຄົນເຂົ້າ-ອອກເມືອງ, ຫ້ອງການພາສີ; ຫ້ອງການບໍລິການ ແລະ ສິ່ງອໍານວຍຄວາມສະດວກຕ່າງໆ ຢ່າງຄົບຖ້ວນ;
5. ຊ່ອງທາງຈາລະຈອນປ່ອຍລົດ ເຂົ້າ-ອອກ, ສໍາລັບຄົນຍ່າງ ແລະ ຍານພາຫະນະ;
6. ສະຖານທີ່ຈອດຍານພາຫະນະ ຂອງເຈົ້າໜ້າທີ່ ແລະ ພະນັກງານປະຈໍາດ່ານ ແລະ ສະຖານທີ່ຈອດຍານພາຫະນະທົ່ວໄປ;
7. ຫ້ອງນໍ້າສາທາລະນະ, ລະບົບລະບາຍນໍ້າ, ປ້ອມຍາມຂາເຂົ້າ-ຂາອອກ, ເຂດສີຂຽວ ແລະ ສວນດອກໄມ້, ສະຖານທີ່ເກັບມ້ຽນຂີ້ເຫຍື້ອ ແລະ ອ້ອມຮອບດ້ວຍຮົ້ວ ບໍລິເວນຂອບເຂດດ່ານ.

**ມາດຕາ 24 ມາດຕະຖານດ່ານທ້ອງຖິ່ນທາງນໍ້າ**

ມາດຕະຖານດ່ານທ້ອງຖິ່ນທາງນໍ້າ ມີດັ່ງນີ້:

1. ຕັ້ງຢູ່ເຂດພັດທະນາເສດຖະກິດທີ່ສໍາຄັນ ລະຫວ່າງ ແຂວງທີ່ມີຊາຍແດນຕິດຈອດກັບປະເທດເພື່ອນບ້ານ;

2. ເນື້ອທີ່ຕໍ່າສຸດ 3 ເຮັກຕາ ໃນນັ້ນ ບໍ່ລວມເອົາເນື້ອທີ່ເຂດທຸລະກິດ ແລະ ບໍລິການຕ່າງໆ;
3. ແຜນຜັງລວມ ແລະ ແຜນຜັງລະອຽດ ຊຶ່ງໄດ້ຜ່ານການເຫັນດີ ແລະ ຮັບຮອງ ຈາກພະແນກໂຍທາທິການ ແລະ ຂົນສົ່ງ ຂັ້ນແຂວງ;
4. ອາຄານເຮັດວຽກ ແລະ ໃຫ້ການບໍລິການ ທີ່ເໝາະສົມ, ມີຮູບແບບທີ່ເປັນເອກະລັກ ຂອງຊາດ ແລະ ທ້ອງຖິ່ນ ຊຶ່ງມີລະບົບອາຄານປະກອບດ້ວຍ: ຫ້ອງການຕໍາຫຼວດກວດຄົນເຂົ້າ-ອອກເມືອງ, ຫ້ອງການພາສີ; ຫ້ອງການບໍລິຫານ ແລະ ສິ່ງອໍານວຍຄວາມສະດວກຕ່າງໆ ຢ່າງຄົບຖ້ວນ;
5. ຊ່ອງທາງຈະລາຈອນປ່ອຍລົດເຂົ້າ-ອອກ ສໍາລັບຄົນ ແລະ ຍານພາຫະນະ;
6. ທາງຂຶ້ນ-ລົງທ່າເຮືອ ສອງ ຊ່ອງທາງ ສໍາລັບລົດຂົນສົ່ງສິນຄ້າ ຫຼື ຕາມຄວາມເໝາະສົມ, ມີຂັ້ນໄດຂຶ້ນ-ລົງທ່າເຮືອສໍາລັບຜູ້ໂດຍສານ ແລະ ທ່ອງທ່ຽວ;
7. ຫ້ອງນໍ້າສາທາລະນະ, ລະບົບລະບາຍນໍ້າ, ປ້ອມຍາມຂາເຂົ້າ-ຂາອອກ, ບ່ອນຖິ້ມຂີ້ເຫຍື້ອ ແລະ ອ້ອມຮອບດ້ວຍຮົ້ວ ບໍລິເວນຂອບເຂດຂອງດ່ານ;
8. ສະຖານທີ່ຈອດພາຫະນະ ຂອງເຈົ້າໜ້າທີ່, ພະນັກງານປະຈໍາດ່ານ ແລະ ສະຖານທີ່ຈອດຍານພາຫະນະທົ່ວໄປ.

## ໝວດທີ 3
## ມາດຕະຖານດ່ານປະເພນີ

### ມາດຕາ 25 ມາດຕະຖານດ່ານປະເພນີທາງບົກ

ມາດຕະຖານດ່ານປະເພນີທາງບົກ ມີດັ່ງນີ້:

1. ຕັ້ງຢູ່ເຂດທີ່ມີມູນເຊື້ອໃນການໄປ-ມາ ຂອງປະຊາຊົນ ລະຫວ່າງ ເມືອງທີ່ມີຊາຍແດນຕິດຈອດກັບປະເທດເພື່ອນບ້ານ;
2. ເນື້ອທີ່ ແລະ ສະຖານທີ່ເຮັດວຽກ ທີ່ເໝາະສົມ ສໍາລັບເຈົ້າໜ້າທີ່ຕໍາຫຼວດກວດຄົນເຂົ້າ-ອອກເມືອງ, ພາສີ ແລະ ອື່ນໆ;
3. ລະບົບສາທາລະນຸປະໂພກຂັ້ນພື້ນຖານ.

### ມາດຕາ 26 ມາດຕະຖານດ່ານປະເພນີທາງນໍ້າ.

ມາດຕະຖານດ່ານປະເພນີທາງນໍ້າ ມີດັ່ງນີ້:

1. ຕັ້ງຢູ່ເຂດທີ່ມີມູນເຊື້ອໃນການໄປ-ມາ ຂອງປະຊາຊົນ ລະຫວ່າງ ເມືອງທີ່ມີຊາຍແດນຕິດຈອດກັບປະເທດເພື່ອນບ້ານ;
2. ເນື້ອທີ່ ແລະ ສະຖານທີ່ເຮັດວຽກ ທີ່ເໝາະສົມ ສໍາລັບເຈົ້າໜ້າທີ່ຕໍາຫຼວດກວດຄົນເຂົ້າ-ອອກເມືອງ, ພາສີ ແລະ ອື່ນໆ;
3. ລະບົບສາທາລະນຸປະໂພກຂັ້ນພື້ນຖານ;
4. ຂັ້ນໄດຂຶ້ນ-ລົງທ່າເຮືອ ສໍາລັບຜູ້ໂດຍສານ ແລະ ທ່ອງທ່ຽວ.

## ພາກທີ IV
## ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະຄຸ້ມຄອງດ່ານເຂົ້າ-ອອກ ສປປ ລາວ
### ໝວດທີ 1
### ຄະນະຄຸ້ມຄອງດ່ານສາກົນ

**ມາດຕາ 27 ທີ່ຕັ້ງ ແລະ ພາລະບົດບາດ ຂອງຄະນະຄຸ້ມຄອງດ່ານສາກົນ**

ຄະນະຄຸ້ມຄອງດ່ານສາກົນ ແມ່ນການຈັດຕັ້ງໜຶ່ງ ຂຶ້ນກັບອົງການປົກຄອງຂັ້ນແຂວງ ທີ່ມີດ່ານຊາຍແດນຕັ້ງຢູ່ ແລະ ຂຶ້ນກັບຊຸນກາງໂດຍກົງທາງດ້ານວິຊາສະເພາະ, ມີຖານະເທົ່າກັບບັນດາພະແນກການຂັ້ນແຂວງ, ມີພາລະບົດບາດໃນການບໍລິຫານ, ຄຸ້ມຄອງ ແລະ ພັດທະນາດ່ານ ເພື່ອຮັບປະກັນໃຫ້ບັນດາຂະແໜງການຄຸ້ມຄອງລັດທາງດ້ານວິຊາສະເພາະ ໄດ້ມີການເຄື່ອນໄຫວ ຢ່າງຄ່ອງຕົວ ແລະ ອຳນວຍຄວາມສະດວກ ໃຫ້ແກ່ຜູ້ໂດຍສານ, ຍານພາຫະນະ ແລະ ສິນຄ້າ, ເຄື່ອງຂອງ ເຂົ້າ-ອອກ ດ່ານສາກົນໃຫ້ມີຄວາມສະດວກ, ວ່ອງໄວ, ໂປ່ງໃສ, ເປັນທຳ, ສະຫງົບ, ປອດໄພ ແລະ ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

ສຳລັບ ດ່ານສະໜາມບິນສາກົນ ແລະ ດ່ານສະຖານີລົດໄຟສາກົນ ແມ່ນບໍ່ມີຄະນະຄຸ້ມຄອງດ່ານ, ສ່ວນວຽກບໍລິຫານ, ອຳນວຍຄວາມສະດວກ ໃຫ້ບັນດາຂະແໜງຄຸ້ມຄອງລັດ ປະຈຳຢູ່ດ່ານ ແລະ ພັດທະນາດ່ານ ແມ່ນໃຫ້ຂຶ້ນກັບສະໜາມບິນສາກົນ ແລະ ສະຖານີລົດໄຟສາກົນ ເປັນຜູ້ຮັບຜິດຊອບ ຕາມລະບຽບການ.

**ມາດຕາ 28 ສິດ ແລະ ໜ້າທີ່ ຂອງຄະນະຄຸ້ມຄອງດ່ານສາກົນ**

ຄະນະຄຸ້ມຄອງດ່ານສາກົນ ມີສິດ ແລະ ໜ້າທີ່ຕົ້ນຕໍ ດັ່ງນີ້:

1. ເຊື່ອມຊຶມ, ກຳແໜ້ນ ແນວທາງນະໂຍບາຍ ຂອງພັກ-ລັດຖະບານ ແລະ ຈັດຕັ້ງປະຕິບັດກົດໝາຍ, ລະບຽບການ ແລະ ນິຕິກຳຕ່າງໆ ຂອງລັດ ກ່ຽວກັບວຽກງານຄຸ້ມຄອງດ່ານ;
2. ຕິດຕາມ, ກວດກາ, ຊຸກຍູ້ ແລະ ອຳນວຍຄວາມສະດວກໃຫ້ເຈົ້າໜ້າທີ່ກ່ຽວຂ້ອງ ໃນການປະຕິບັດໜ້າທີ່ໃຫ້ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ, ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ;
3. ໂຄສະນາ ແລະ ເຜີຍແຜ່ນິຕິກຳ ຂອງຂະແໜງການກ່ຽວຂ້ອງ ໃນແຕ່ລະໄລຍະ ເປັນຕົ້ນແມ່ນ ລະບຽບການເຂົ້າ-ອອກດ່ານ ແລະ ການເກັບຄ່າທຳນຽມ ແລະ ຄ່າບໍລິການຕ່າງໆ;
4. ຕິດຕາມ, ກວດກາ ແລະ ຈັດຕັ້ງປະຕິບັດວຽກພັກ ແລະ ພະນັກງານ ຢູ່ດ່ານ ຂອງຕົນ;
5. ຄົ້ນຄວ້າ, ສ້າງແຜນການເຄື່ອນໄຫວວຽກງານ ແລະ ແຜນງົບປະມານໃນການຄຸ້ມຄອງບໍລິຫານດ່ານ ປະຈຳປີ, ແຜນພັດທະນາລະບົບຄຸ້ມຄອງບໍລິຫານຕ່າງໆຂອງດ່ານ ໃນແຕ່ລະໄລຍະ;
6. ອຳນວຍຄວາມສະດວກ ແລະ ຄຸ້ມຄອງ ບັນດາຫົວໜ່ວຍທຸລະກິດ ທີ່ດຳເນີນທຸລະກິດ ຢູ່ໃນຂອບເຂດດ່ານ ພາຍຫຼັງທີ່ໄດ້ຮັບການຕົກລົງອະນຸມັດ ຈາກລັດຖະບານ;
7. ຄຸ້ມຄອງ, ນຳໃຊ້, ປົກປັກຮັກສາ, ສ້ອມແປງ ແລະ ອະນາໄມ ອາຄານ, ສາງ, ຫ້ອງການ, ເດີ່ນຈອດລົດ, ເສັ້ນທາງ, ລະບົບໄອທີ, ໂທລະຄົມມະນາຄົມ ແລະ ການສື່ສານ, ໄຟຟ້າແສງສະຫວ່າງ, ໄຟຟ້າສຳຮອງ, ນ້ຳປະປາ, ລະບົບລະບາຍນ້ຳ, ການມອດໄຟ, ກ້ອງວົງຈອນປິດ, ປະຕູເຂົ້າ-ອອກ, ປ້ອມຍາມ, ຮົ້ວ, ກຳແພງເຂດຂຽວ, ສວນດອກໄມ້, ວັດຖຸອຸປະກອນ, ສິ່ງກໍ່ສ້າງ ແລະ ອື່ນໆ ຢູ່ໃນຂອບເຂດດ່ານ ໃຫ້ມີຄວາມສະອາດ, ສວຍງາມ ແລະ ໃຊ້ງານໄດ້ ເປັນປົກກະຕິ;
8. ສ້າງແຜນປ້ອງກັນ ແລະ ແກ້ໄຂໃນກໍລະນີ ທີ່ເກີດໄພພິບັດທາງທຳມະຊາດ ແລະ ເຫດການສຸກເສີນ;
9. ຄົ້ນຄ້ວາ ສະເໜີຂັ້ນເທິງປັບປຸງກ່ຽວກັບຄ່າທຳນຽມ ແລະ ຄ່າບໍລິການຕ່າງໆ ທີ່ເຫັນວ່າບໍ່ສອດຄ່ອງ ກັບສະພາບຄວາມເປັນຈິງ ໃນການຂະຫຍາຍຕົວ ຂອງເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ;

10. ພົວພັນ ຮ່ວມມື ກັບບັນດາຂະແໜງການພາຍໃນ, ຕ່າງປະເທດ ແລະ ຄູ່ດ່ານ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງ, ບົດບັນທຶກຄວາມເຂົ້າໃຈ, ສັນຍາ, ອະນຸສັນຍາສອງຝ່າຍ ແລະ ຫຼາຍຝ່າຍ ທີ່ເປັນພາຄີ; ຍາດແຍ່ງ ແລະ ຖອດຖອນບົດຮຽນກັບຕ່າງປະເທດ ກ່ຽວກັບວຽກງານຄຸ້ມຄອງດ່ານ;
11. ສະຫຼຸບ ແລະ ລາຍງານ ການເກັບລາຍຮັບ ແລະ ການເຄື່ອນໄຫວຮອບດ້ານ ພາຍໃນດ່ານ ໃຫ້ອົງການປົກຄອງທ້ອງຖິ່ນ ແລະ ສູນກາງ ຢ່າງເປັນປົກກະຕິ;
12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

**ມາດຕາ 29 ໂຄງປະກອບກົງຈັກການຈັດຕັ້ງ ຂອງຄະນະຄຸ້ມຄອງດ່ານສາກົນ**

ໂຄງປະກອບກົງຈັກການຈັດຕັ້ງ ຂອງຄະນະຄຸ້ມຄອງດ່ານສາກົນ ປະກອບມີ ດັ່ງນີ້:

1. ຫ້ອງການ (ບໍລິຫານ ແລະ ພົວພັນຊາຍແດນ-ກົງສູນ);
2. ຂະແໜງ ກວດຄົນເຂົ້າ-ອອກເມືອງ;
3. ຂະແໜງ ພາສີ;
4. ຂະແໜງ ກັກກັນ (ພືດ, ສັດ ແລະ ປ່າໄມ້; ອາຫານ ແລະ ຢາ, ຄວບຄຸມພະຍາດຕິດຕໍ່; ຢັ້ງຢືນ ຄວາມຖືກຕ້ອງ ຂອງນ້ຳມັນເຊື້ອໄຟ, ກວດສອບຄຸນນະພາບຜະລິດຕະພັນ ແລະ ສິນຄ້າ).

ສຳລັບ ດ່ານສະໜາມບິນສາກົນ ແລະ ດ່ານສະຖານີລົດໄຟສາກົນ ແມ່ນໃຫ້ມີແຕ່ ຂະແໜງກວດຄົນເຂົ້າ-ອອກ ເມືອງ-ກົງສູນ, ຂະແໜງພາສີ ແລະ ຂະແໜງກັກກັນ.

**ມາດຕາ 30 ສິດ ແລະ ໜ້າທີ່ ຂອງຫ້ອງການ**

ຫ້ອງການ ຄະນະຄຸ້ມຄອງດ່ານສາກົນ ມີສິດ ແລະ ໜ້າທີ່ ດັ່ງນີ້:

**1. ວຽກງານບໍລິຫານ**

1) ເຜີຍແຜ່, ເຊື່ອມຊຶມ ແນວທາງນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວຂ້ອງ; ຕິດຕາມ, ຊຸກຍູ້ ແລະ ກວດກາ ການຈັດຕັ້ງປະຕິບັດວຽກງານ ຂອງບັນດາຂະແໜງການ ແລະ ພາກສ່ວນກ່ຽວຂ້ອງ ທີ່ປະຈຳຢູ່ດ່ານ;
2) ເປັນເສນາທິການໃຫ້ແກ່ຄະນະຄຸ້ມຄອງດ່ານສາກົນ ກ່ຽວກັບວຽກງານພັກ-ພະນັກງານ ທີ່ປະຕິບັດໜ້າທີ່ ຢູ່ດ່ານ;
3) ເປັນໃຈກາງໃນການພົວພັນ, ປະສານງານສົມທົບກັບ ພາກສ່ວນຄຸ້ມຄອງລັດ ຕາມສາຍວິຊາການພາຍໃນດ່ານ;
4) ຄຸ້ມຄອງ, ປົກປັກ ແລະ ບຸລະນະຮັກສາພື້ນຖານໂຄງລ່າງ, ສິ່ງອຳນວຍຄວາມສະດວກ, ຍານພາຫະນະ, ເຄື່ອງມື, ວັດຖຸອຸປະກອນ, ທີ່ດິນ ແລະ ຊັບສິນອື່ນ ຂອງດ່ານ;
5) ຈັດສັນ, ຄຸ້ມຄອງ ລະບົບບໍລິການຢູ່ດ່ານ ດ້ວຍການນຳໃຊ້ວັດຖຸ ອຸປະກອນ ແລະ ເຕັກໂນໂລຊີ ທີ່ທັນສະໄໝ ເພື່ອອຳນວຍຄວາມສະດວກໃຫ້ແກ່ການຄຸ້ມຄອງລວມສູນເອກະພາບ ແລະ ເຊື່ອມໂຍງ ພາຍໃນ ແລະ ສາກົນ;
6) ຄຸ້ມຄອງ, ຈັດສັນ ແລະ ສ້າງສິ່ງອຳນວຍຄວາມສະດວກ ໃຫ້ແກ່ບັນດາຂະແໜງການປະຈຳດ່ານ, ໃນການເຄື່ອນໄຫວວຽກງານ ຂອງຕົນ ດ້ວຍການສະໜອງສະຖານທີ່ເຮັດວຽກ, ຫ້ອງການ, ເຄື່ອງມື, ວັດຖຸອຸປະກອນ ແລະ ອື່ນໆ ໃຫ້ມີຄວາມເປັນລະບຽບຮຽບຮ້ອຍ;
7) ຂຶ້ນແຜນ, ຄຸ້ມຄອງລາຍຮັບ-ລາຍຈ່າຍ ໃນການຄຸ້ມຄອງບໍລິຫານ ຂອງດ່ານ ຕາມແຜນງົບປະມານ;
8) ຈັດສັນ ແລະ ຄຸ້ມຄອງ ສິ່ງອຳນວຍຄວາມສະດວກ ໃຫ້ແກ່ຫົວໜ່ວຍທຸລະກິດບໍລິການ ຢູ່ໃນຂອບເຂດດ່ານ;

9) ສັງລວມສະຖິຕິຜູ້ໂດຍສານ, ຍານພາຫະນະ ແລະ ສິນຄ້າ ຜ່ານເຂົ້າ-ອອກດ່ານປະຈຳເດືອນ, ງວດ, ປີ;
10) ປະຊາສຳພັນ, ເຜີຍແຜ່ ແລະ ຕິດປະກາດ ອັດຕາຄ່າທຳນຽມ ແລະ ຄ່າບໍລິການ;
11) ຄຸ້ມຄອງຫົວໜ່ວຍທຸລະກິດບໍລິການຢູ່ໃນຂອບເຂດດ່ານ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;
12) ອຳນວຍຄວາມສະດວກ ໃຫ້ແກ່ພາກສ່ວນ ຮັບຜິດຊອບວຽກງານກົງສຸນ ຢູ່ບັນດາດ່ານ ທີ່ມີເງື່ອນໄຂຄົບຖ້ວນ ຕາມລະບຽບການ ຂອງກະຊວງການຕ່າງປະເທດ;
13) ປະສານສົມທົບ, ອຳນວຍຄວາມສະດວກ ກັບຂະແໜງໂຍທາທິການ ແລະ ຂົນສົ່ງ ໃນການບູລະນະຮັກສາ ສ້ອມແປງລະບົບເສັ້ນທາງ, ຂົວ, ຕຶກອາຄານ ຊຶ່ງເປັນໂຄ່ງລ່າງພື້ນຖານລວມ ຂອງດ່ານ;
14) ສະຫຼຸບ ແລະ ລາຍງານ ກ່ຽວກັບການຈັດຕັ້ງປະຕິບັດວຽກງານ ຂອງຕົນ ໃຫ້ຄະນະຄຸ້ມຄອງດ່ານຢ່າງເປັນປົກກະຕິ;
15) ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ, ລະບຽບການ ແລະ ຕາມການມອບໝາຍຂອງຂັ້ນເທິງ.

**2. ວຽກງານຊາຍແດນ-ກົງສຸນ ມີດັ່ງນີ້:**

1) ຮັບຜິດຊອບວຽກງານການພົວພັນຊາຍແດນ ໃຫ້ສອດຄ່ອງກັບສົນທິສັນຍາສອງຝ່າຍກ່ຽວກັບຊາຍແດນ ທີ່ ສປປ ລາວ ແລະ ປະເທດໃກ້ຄຽງ ເປັນພາຄີ;
2) ວຽກງານອອກວີຊາກັບດ່ານ ແລະ ວຽກງານພົວພັນກົງສຸນ ຂອງດ່ານ;
3) ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານ ຊາຍແດນ-ກົງສຸນ ຕໍ່ຂະແໜງການຕົນ ແລະ ຄະນະຄຸ້ມຄອງດ່ານ ຢ່າງເປັນປົກກະຕິ;
4) ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 31 ສິດ ແລະ ໜ້າທີ່ ຂອງຂະແໜງກວດຄົນເຂົ້າ-ອອກເມືອງ**

1) ຮັບຜິດຊອບຄວາມສະຫງົບ, ຄວາມປອດໄພ, ຄວາມເປັນລະບຽບຮຽບຮ້ອຍ ຢູ່ຂອບເຂດດ່ານ ແລະ ໃນລັດສະໝີ 500 ແມັດ ຈາກດ່ານ;
2) ກວດກາເອກະສານເດີນທາງທຸກປະເພດຂອງຜູ້ໂດຍສານ ແລະ ຍານພາຫະນະ;
3) ຢຸດ ຫຼື ໂຈະ ການເດີນທາງເຂົ້າ-ອອກ ສປປ ລາວ ຂອງຜູ້ໂດຍສານ ທີ່ບໍ່ຄົບເງື່ອນໄຂ ຕາມທີ່ໄດ້ກຳນົດໄວ້ ໃນມາດຕາ 9, 12 ແລະ 13 ຂອງກົດໝາຍວ່າດ້ວຍການເຂົ້າ-ອອກ ແລະ ການຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ;
4) ສຶກສາອົບຮົມ, ກ່າວເຕືອນ, ປັບໃໝ, ກັກຕົວ ແລະ ດຳເນີນສືບສວນ-ສອບສວນຕາມຂັ້ນຕອນຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ໃນຂອບເຂດດ່ານ;
5) ກວດກາ ຍານພາຫະນະ, ວັດຖຸ ແລະ ເຄື່ອງຂອງຜູ້ໂດຍສານ ທີ່ບໍ່ມີຈຸດປະສົງທາງດ້ານການຄ້າ;
6) ກໍລະນີ ມີແຫຼ່ງຂ່າວທີ່ໜ້າເຊື່ອຖື ສາມາດເຂົ້າຮ່ວມໃນການກວດກາສິນຄ້າ ແລະ ຍານພາຫະນະຂົນສົ່ງສິນຄ້າ ກັບເຈົ້າໜ້າທີ່ກ່ຽວຂ້ອງ;
7) ພົວພັນ ແລະ ຮ່ວມມືກັບ ດ່ານເຊິ່ງໜ້າ ກ່ຽວກັບວຽກງານເຂົ້າ-ອອກ ສປປ ລາວ ຕາມພາລະບົດບາດ;
8) ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານເຂົ້າ-ອອກ ສປປ ລາວ ຕໍ່ຂະແໜງການຕົນ ແລະ ຄະນະຄຸ້ມຄອງດ່ານ ຢ່າງເປັນປົກກະຕິ;
9) ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 32 ສິດ ແລະ ໜ້າທີ່ ຂອງຂະແໜງພາສີ**

1. ໂຄສະນາ ເຜີຍແຜ່ ແລະ ຈັດຕັ້ງປະຕິບັດກົດໝາຍວ່າດ້ວຍພາສີ, ກົດໝາຍອື່ນ, ນິຕິກຳທີ່ກ່ຽວກັບວຽກງານພາສີ;
2. ຄຸ້ມຄອງ, ຕິດຕາມ, ກວດກາ ການສົ່ງອອກ, ນຳເຂົ້າ, ສົ່ງອອກຕໍ່ ແລະ ຜ່ານແດນ ສິນຄ້າ-ເຄື່ອງຂອງ ບໍລິການ ບົນພື້ນຖານຄວາມຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ ຢ່າງວ່ອງໄວ ແລະ ຮັບປະກັນ;
3. ຈັດເກັບພາສີ, ພັນທະອື່ນ, ຄ່າທຳນຽມ ແລະ ຄ່າບໍລິການ ເຂົ້າງົບປະມານແຫ່ງລັດ ໃຫ້ຖືກຕ້ອງ, ຄົບຖ້ວນ, ຊັດເຈນ, ໂປ່ງໃສ ແລະ ທັນເວລາ ຕາມກົດໝາຍ ແລະ ລະບຽບການ;
4. ເປັນເຈົ້າການປະສານສົມທົບກັບພາກສ່ວນກ່ຽວຂ້ອງ ຈັດຕັ້ງປະຕິບັດກົນໄກບໍລິຫານຄວາມສ່ຽງ ເຂົ້າໃນການກວດກາສິນຄ້າ;
5. ກວດກາ ແລະ ສະກັດກັ້ນທຸກການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບພາສີ ແລະ ລະບຽບການອື່ນ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
6. ສະຫຼຸບ ແລະ ລາຍງານຜົນການເຄື່ອນໄຫວວຽກງານພາສີ ໃຫ້ຄະນະຄຸ້ມຄອງດ່ານ ແລະ ກົມພາສີ ກະຊວງການເງິນ ຢ່າງເປັນປົກກະຕິ;
7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 33 ສິດ ແລະ ໜ້າທີ່ ຂອງຂະແໜງກັກກັນ (ພືດ, ສັດ ແລະ ປ່າໄມ້; ອາຫານ ແລະ ຢາ-ຄວບຄຸມພະຍາດຕິດຕໍ່; ປັ້ງຢືນຄວາມຖືກຕ້ອງ ຂອງນ້ຳມັນເຊື້ອໄຟ, ກວດສອບຄຸນນະພາບຜະລິດຕະພັນ-ສິນຄ້າ).**

**1. ວຽກງານກັກກັນພືດ ມີດັ່ງນີ້:**

1) ຈັດຕັ້ງປະຕິບັດກົດໝາຍລະບຽບການ ກ່ຽວກັບວຽກງານປ້ອງກັນ ແລະ ກັກກັນພືດ ໃນຂອບເຂດດ່ານ;
2) ປະຕິບັດໜ້າທີ່ວຽກງານ ຕາມພາລະບົດບາດ ແລະ ຫຼັກເນີຊາການ ຢ່າງຖືກຕ້ອງ, ໂປ່ງໃສ, ກວດສອບໄດ້, ຄົບຖ້ວນ ແລະ ທັນຕາມເວລາທີ່ກຳນົດໄວ້;
3) ສະກັດກັ້ນ ບັນດາສິນຄ້າທີ່ເຂົ້າ-ສົ່ງອອກທີ່ຜິດກົດໝາຍ , ພືດທີ່ຕ້ອງຫ້າມນຳເຂົ້າ ລວມທັງສັງລວມບັນການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການປ້ອງກັນ ແລະ ກັກກັນພືດ ເກັບກຳຂໍ້ມູນເບື້ອງຕົ້ນ ກ່ຽວກັບການກະທຳຜິດ ຢູ່ຂອບເຂດດ່ານ ແລະ ແຈ້ງໃຫ້ຂະແໜງການທີ່ກ່ຽວຂ້ອງ ເພື່ອແກ້ໄຂ ຕາມກົດໝາຍ ແລະ ລະບຽບການ;
4) ຈັດຕັ້ງປະຕິບັດກົນໄກບໍລິຫານຄວາມສ່ຽງ ເຂົ້າໃນການກວດກາສິນຄ້າ;
5) ອຳນວຍຄວາມສະດວກໃຫ້ແກ່ການນຳເຂົ້າ, ສົ່ງອອກ, ນຳເຂົ້າ ເພື່ອສົ່ງອອກຕໍ່ ແລະ ສົ່ງຜ່ານ ພືດ ແລະ ຜະລິດຕະພັນພືດ ຢ່າງວ່ອງໄວ, ໂປ່ງໃສ ແລະ ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;
6) ກວດກາ, ທົດສອບ ແລະ ວິໄຈ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ເຊັ່ນ: ຝຸ່ນ, ຢາປາບສັດຕູພືດ ແລະ ສານເຄມີຕົກຄ້າງ ໃນຜະລິດຕະພັນພືດ ຕາມເງື່ອນໄຂ ຂອງການນຳເຂົ້າລະຫວ່າງປະເທດ;
7) ກັກ, ແຍກປ່ຽວ, ເກັບຮັກສາຕົວຢ່າງ, ສົ່ງຕົວຢ່າງໄປວິໄຈ, ບຳບັດ, ປະຕິເສດການນຳເຂົ້າ, ສົ່ງກັບຄືນ, ທຳລາຍ ຫຼື ນຳໃຊ້ມາດຕະການອື່ນ ຕໍ່ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມທີ່ມີສັດຕູພືດ ລວມ ທັງ ຝຸ່ນ, ຢາປາບສັດຕູພືດ ແລະ ສານເຄມີຕົກຄ້າງ ໃນຜະລິດຕະພັນພືດ ພ້ອມທັງແຈ້ງໃຫ້ຜູ້ປະກອບການຮັບຜິດຊອບຕໍ່ບັນຫາດັ່ງກ່າວ;

8) ກວດກາ, ພິຈາລະນາອອກໃບຢັ້ງຢືນສຸຂານາໄມພືດ ການສົ່ງອອກ, ສົ່ງອອກຕໍ່ ແລະ ເອກະສານອື່ນ ຕາມການມອບໝາຍ ຂອງກົມປູກຝັງ, ກະຊວງກະສິກຳ ແລະ ປ່າໄມ້ ແລະ ຕາມການສະເໜີ ຂອງເຈົ້າຂອງສິນຄ້າ;
9) ສະຫຼຸບ, ສັງລວມສະຖິຕິ ສິນຄ້າກະສິກຳ, ປັດໄຈການຜະລິດ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານການປ້ອງກັນ ແລະ ກັກກັນພືດ ໃຫ້ຂະແໜງການກະສິກຳ ແລະ ປ່າໄມ້ ແລະ ຄະນະຄຸ້ມຄອງດ່ານ ຢ່າງເປັນປົກກະຕິ
10) ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**2. ວຽກງານກັກກັນສັດ ມີດັ່ງນີ້:**

1) ຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານລ້ຽງສັດ, ສັດຕະວະແພດ ແລະ ປະມົງ ໃນຂອບເຂດດ່ານ;
2) ປະຕິບັດໜ້າທີ່ວຽກງານ ຕາມພາລະບົດບາດ ແລະ ຫຼັກວິຊາການ ຢ່າງຖືກຕ້ອງ, ຄົບຖ້ວນ ແລະ ທັນຕາມກຳນົດເວລາ;
3) ກວດກາ, ພິຈາລະນາ ແລະ ຢັ້ງຢືນຄວາມຖືກຕ້ອງ ຂອງຜະລິດຕະພັນສິນຄ້າກ່ຽວກັບສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບການປະມົງ ແລະ ເອກະສານທີ່ກ່ຽວຂ້ອງໃນການນຳເຂົ້າສົ່ງອອກ ແລະ ສົ່ງຜ່ານ;
4) ກວດກາດ້ານສັດຕະວະແພດ ແລະ ພິຈາລະນາອະນຸຍາດ ຫຼື ບໍ່ອະນຸຍາດໃຫ້ເຄື່ອນຍ້າຍສັດ, ສັດນ້ຳ ຫຼື ຜະລິດຕະພັນສິນຄ້າ ກ່ຽວກັບສັດ ແລະ ການປະມົງ ເຂົ້າ-ອອກດ່ານຊາຍແດນ;
5) ນຳໃຊ້ມາດຕະການດ້ານສຸຂານາໄມ ເປັນຕົ້ນກັກ, ແຍກປ່ຽວ, ສົ່ງຕົວຢ່າງໄປວິໄຈ, ບຳບັດ, ປະຕິເສດການນຳເຂົ້າ, ສົ່ງກັບຄືນ, ທຳລາຍສັດ-ສັດນ້ຳ, ຜະລິດຕະພັນສັດ-ສັດນ້ຳ ຫຼື ວັດຖຸທີ່ປົນເປື້ອນດ້ວຍເຊື້ອພະຍາດສັດ, ສັດນ້ຳ ທີ່ຈຳເປັນຕ້ອງແຈ້ງ ຫຼື ໃນກໍລະນີພົບການປົນເປື້ອນ ຂອງສິ່ງທີ່ເປັນອັນຕະລາຍ;
6) ຕິດຕາມເກັບກຳຂໍ້ມູນການລະບາດ ຂອງພະຍາດລະບາດສັດຢູ່ຕ່າງປະເທດ ແລະ ປະເທດໃກ້ຄຽງເປັນປົກກະຕິເພື່ອເຝົ້າລະວັງ ການແຜ່ລະບາດພະຍາດສັດ, ສັດນ້ຳ ແລະ ວິເຄາະຄວາມສ່ຽງ;
7) ສະກັດກັ້ນ ການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານລ້ຽງສັດ, ສັດຕະວະແພດ ແລະ ປະມົງ;
8) ເກັບກຳຂໍ້ມູນເບື້ອງຕົ້ນ ກ່ຽວກັບການກະທຳຜິດ ຢູ່ຂອບເຂດດ່ານ ແລະ ແຈ້ງໃຫ້ຂະແໜງການທີ່ກ່ຽວຂ້ອງ ເພື່ອແກ້ໄຂຕາມກົດໝາຍ ແລະ ລະບຽບການ;
9) ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານການກວດກາ ແລະ ກັກກັນສັດ ໃຫ້ ຂະແໜງກະສິກຳ ແລະ ປ່າໄມ້ ແລະ ຄະນະຄຸ້ມຄອງດ່ານ ຢ່າງເປັນປົກກະຕິ;
10) ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**3. ວຽກງານປ່າໄມ້**

1) ຈັດຕັ້ງປະຕິບັດ ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານກວດກາ ໄມ້, ສັດປ່າ ແລະ ເຄື່ອງປ່າຂອງດົງໃນຂອບເຂດດ່ານ;
2) ປະຕິບັດໜ້າທີ່ວຽກງານ ຕາມພາລະບົດບາດ ແລະ ຫຼັກວິຊາການ ຢ່າງຖືກຕ້ອງ, ຄົບຖ້ວນ ແລະ ທັນຕາມກຳນົດເວລາ;

3) ກວດກາ ແລະ ສະກັດກັ້ນ ການລະເມີດກົດໝາຍ ວ່າດ້ວຍປ່າໄມ້, ກົດໝາຍ ວ່າດ້ວຍສັດປ່າ ແລະ ລະບຽບການກ່ຽວກັບ ການສົ່ງອອກ, ນໍາເຂົ້າ ແລະ ສົ່ງຜ່ານ ໄມ້, ຜະລິດຕະພັນໄມ້, ສັດປ່າ, ຊິ້ນສ່ວນສັດປ່າ, ຜະລິດຕະພັນຈາກຊິ້ນສ່ວນສັດປ່າ ແລະ ເຄື່ອງປ່າຂອງດົງ;

4) ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນ ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

**4. ວຽກງານກວດກາອາຫານ, ຢາ ແລະ ຄວບຄຸມພະຍາດຕິດຕໍ່ ມີດັ່ງນີ້:**

1) ຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານກວດກາອາຫານ, ຢາ ແລະ ຜະລິດຕະພັນການແພດ, ກັນ ແລະ ຄວບຄຸມພະຍາດຕິດຕໍ່ ຢູ່ຂອບເຂດດ່ານ;

2) ກວດກາອາຫານ, ຢາ ແລະ ຜະລິດຕະພັນການແພດ ທີ່ສົ່ງອອກ-ນໍາເຂົ້າ ແລະ ສົ່ງຜ່ານ ຢູ່ດ່ານ ຕາມກົດໝາຍ ແລະ ລະບຽບການ;

3) ຕິດຕາມ, ກວດກາ, ເກັບຕົວຢ່າງ, ກວດວິໄຈເບື້ອງຕົ້ນ, ຍຶດ, ອາຍັດ ອາຫານ, ຢາ ແລະ ຜະລິດຕະພັນການແພດ ທີ່ນໍາເຂົ້າບໍ່ຖືກຕ້ອງ ຕາມລະບຽບກົດໝາຍ;

4) ຈັດຕັ້ງປະຕິບັດລະບົບຄວາມສ່ຽງ ຂອງຜະລິດຕະພັນ ອາຫານ, ຢາ ແລະ ຜະລິດຕະພັນການແພດ;

5) ປະຕິບັດຕາມກົດໝາຍວ່າດ້ວຍການ ກັນ ແລະ ຄວບຄຸມພະຍາດຕິດຕໍ່ ເປັນຕົ້ນ ການເຝົ້າລະວັງ 19 ພະຍາດແຫ່ງຊາດ, ກັນ, ຄວບຄຸມ,ໂຕ້ຕອບເຫດການສຸກເສີນດ້ານສາທາລະນະສຸກ, ແຍກປ່ຽວ, ໃຫ້ປະຖົມພະຍາບານຂັ້ນຕົ້ນ, ສົ່ງຄົນເຈັບ ຫຼື ກໍລະນີສົງໄສ ສົ່ງໄປສະຖານປິ່ນປົວທີ່ໄດ້ກໍານົດໄວ້:

6) ໃນກໍລະນີ ພົບຜູ້ໂດຍສານທີ່ມີອາການສົງໄສຕິດເຊື້ອພະຍາດຕິດຕໍ່ ຫຼື ໃນສະພາບມີການລະບາດພະຍາດຕິດຕໍ່ ເກີດຂຶ້ນຢູ່ປະເທດທີ່ມີຊາຍແດນຕິດກັບ ສປປ ລາວ ຫຼື ປະເທດອື່ນ ສາມາດດໍາເນີນການກວດກາ ແລະ ອອກໃບ ຢັ້ງຢືນສຸຂະພາບໃຫ້ຜູ້ໂດຍສານ;

7) ສະຫຼຸບ ແລະ ລາຍງານ ກ່ຽວກັບການຈັດຕັ້ງປະຕິບັດວຽກງານ ຂອງຕົນ ໃຫ້ອົງການຄຸ້ມຄອງວຽກງານກວດກາອາຫານ, ຢາ ແລະ ຜະລິດຕະພັນການແພດ, ກັນ ແລະ ຄວບຄຸມພະຍາດຕິດຕໍ່ ແລະ ຄະນະຄຸ້ມຄອງດ່ານ ຢ່າງເປັນປົກກະຕິ;

8) ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**5. ວຽກງານກວດສອບຄຸນນະພາບຜະລິດຕະພັນ-ສິນຄ້າ**

1) ໂຄສະນາ, ເຜີຍແຜ່, ຈັດຕັ້ງປະຕິບັດ ກົດໝາຍ ແລະ ລະບຽບການກ່ຽວກັບວຽກງານ ກວດກາຄຸນນະພາບຜະລິດຕະພັນ ແລະ ສິນຄ້າ;

2) ຄຸ້ມຄອງ, ຕິດຕາມ ກວດກາມາດຕະຖານ ແລະ ຄຸນນະພາບ ຜະລິດຕະພັນ ແລະ ສິນຄ້າ ນໍາເຂົ້າ-ສົ່ງອອກ ບົນພື້ນຖານຄວາມຖືກຕ້ອງ ຕາມມາດຕະຖານແຫ່ງຊາດ, ພາກພື້ນ ແລະ ສາກົນ;

3) ສະກັດກັ້ນ ການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານ ກວດກາຄຸນນະພາບຜະລິດຕະພັນ ແລະ ສິນຄ້າ;

4) ກວດກາ ແລະ ທົດສອບ ຜະລິດຕະພັນ ແລະ ສິນຄ້າ ເຊັ່ນ: ນໍ້າມັນເຊື້ອໄຟ, ເຄື່ອງໃຊ້ໄຟຟ້າ ແລະ ເອເລັກໂຕນິກ, ວັດສະດຸການກໍ່ສ້າງ ແລະ ອື່ນໆ;

5) ພິຈາລະນາອອກໃບຢັ້ງຢືນຄຸນນະພາບ ຜະລິດຕະພັນ ແລະ ສິນຄ້າ ທີ່ນໍາເຂົ້າ-ສົ່ງອອກ ແລະ ເອກະສານອື່ນໆ ຕາມການມອບໝາຍ;

6) ເຂົ້າຮ່ວມກອງປະຊຸມສ່ອງແສງ ການຈັດຕັ້ງປະຕິບັດວຽກງານຢູ່ດ່ານ ປະຈໍາອາທິດ, ປະຈໍາເດືອນ ແລະ ປະຈໍາປີ;

7) ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດ ວຽກງານກວດກາຄຸນນະພາບຜະລິດຕະພັນ ແລະ ສິນຄ້າ ໃຫ້ຂະແໜງການອຸດສາຫະກຳ ແລະ ການຄ້າ ແລະ ຄະນະຄຸ້ມຄອງດ່ານ ຢ່າງເປັນປົກກະຕິ;

8) ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

6. ວຽກງານ**ປັ້ງປືນຄວາມຖືກຕ້ອງ ຂອງນ້ຳມັນເຊື້ອໄຟ ດ້ວຍການປອດສານມາກເກີ,**

1. ໂຄສະນາເຜີຍແຜ່ ນະໂຍບາຍ, ມາດຕະການ, ລະບຽບການ ແລະ ຂໍ້ແນະນຳ ກ່ຽວກັບການຄຸ້ມຄອງ, ຕິດຕາມ, ກວດກາ ການນຳໃຊ້ສານມາກເກີປອດໃສ່ນ້ຳມັນເຊື້ອໄຟ;
2. ດຳເນີນການປອດສານມາກເກີໃສ່ນ້ຳມັນເຊື້ອໄຟ ທີ່ນຳເຂົ້າຈາກຕ່າງປະເທດ;
3. ອອກໃບປັ້ງປືນການປອດສານມາກເກີໃສ່ນ້ຳມັນເຊື້ອໄຟ;
4. ເຂົ້າຮ່ວມກອງປະຊຸມສ່ອງແສງ ການຈັດຕັ້ງປະຕິບັດວຽກງານຢູ່ດ່ານ ປະຈຳອາທິດ, ປະຈຳເດືອນ ແລະ ປະຈຳປີ;
5. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດ ວຽກງານປັ້ງປືນຄວາມຖືກຕ້ອງ ຂອງນ້ຳມັນເຊື້ອໄຟ ດ້ວຍການປອດສານມາກເກີ ໃຫ້ຂະແໜງການພະລັງງານ ແລະ ບໍ່ແຮ່ ແລະ ຄະນະຄຸ້ມຄອງດ່ານ ຢ່າງເປັນປົກກະຕິ;
6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 34 ໂຄງປະກອບບຸກຄະລາກອນ ຂອງຄະນະຄຸ້ມຄອງດ່ານສາກົນ**

ໂຄງປະກອບບຸກຄະລາກອນ ຂອງຄະນະຄຸ້ມຄອງດ່ານສາກົນ ປະກອບມີ ດັ່ງນີ້:

1. ຫົວໜ້າຄະນະຄຸ້ມຄອງດ່ານສາກົນ ປະກອບມີ 01 ທ່ານ, ຕຳແໜ່ງບໍລິຫານທຽບເທົ່າຫົວໜ້າພະແນກການ ຂັ້ນແຂວງ (ຕຳແໜ່ງບໍລິຫານ ປະເພດ 03) ຊຶ່ງໄດ້ຮັບການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ບ່ອນທີ່ດ່ານຕັ້ງຢູ່ ພາຍຫຼັງສະພາປະຊາຊົນຂັ້ນແຂວງຮັບຮອງ;
2. ມີຮອງຫົວໜ້າຄະນະຄຸ້ມຄອງດ່ານສາກົນ ຈຳນວນໜຶ່ງ ຊຶ່ງໄດ້ຮັບການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ບ່ອນທີ່ດ່ານຕັ້ງຢູ່;
3. ມີຫົວໜ້າຫ້ອງການ, ຮອງຫົວໜ້າຫ້ອງການ ແລະ ວິຊາການ ບໍລິຫານ ຕາມການກຳນົດຕຳແໜ່ງງານ, ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຕາມການສະເໜີ ຂອງ ຫົວໜ້າຄະນະຄຸ້ມຄອງດ່ານສາກົນ;
4. ມີຫົວໜ້າຂະແໜງ ກວດຄົນເຂົ້າ-ອອກເມືອງ ປະຈຳດ່ານສາກົນ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງໂດຍ ລັດຖະມົນຕີ ກະຊວງປ້ອງກັນຄວາມສະຫງົບ, ສ່ວນຮອງຫົວໜ້າຂະແໜງ ແມ່ນຖືກແຕ່ງຕັ້ງ, ຍົກຍ້າຍ ແລະ ປົດຕຳແໜ່ງໂດຍຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນແຂວງ ໂດຍການເຫັນດີ ຂອງ ຫົວໜ້າກົມໃຫຍ່ການເມືອງປ້ອງກັນຄວາມສະຫງົບ;
5. ຜູ້ຮັບຜິດຊອບວຽກງານກົງສຸນ ແມ່ນຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍກະຊວງການຕ່າງປະເທດ;
6. ມີຫົວໜ້າຂະແໜງ, ຮອງຫົວໜ້າຂະແໜງ ແລະ ວິຊາການ ພາສີປະຈຳດ່ານສາກົນຕາມການກຳນົດຕຳແໜ່ງ ງານ, ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍລັດຖະມົນຕີ ກະຊວງການເງິນ;
7. ມີຫົວໜ້າຂະແໜງ, ຮອງຫົວໜ້າຂະແໜງ ແລະ ວິຊາການ ກັກກັນ(ພືດ, ສັດ ແລະ ປ່າໄມ້; ອາຫານ ແລະ ຢາ-ຄວບຄຸມພະຍາດຕິດຕໍ່ ແລະ ປັ້ງປືນຄວາມຖືກຕ້ອງ ຂອງນ້ຳມັນເຊື້ອໄຟ, ກວດສອບຄຸນນະພາບ ຜະລິດຕະພັນ-ສິນຄ້າ) ປະຈຳດ່ານສາກົນ ຕາມການກຳນົດຕຳແໜ່ງງານ, ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດ ຕຳແໜ່ງໂດຍລັດຖະມົນຕີ ກະຊວງກ່ຽວຂ້ອງ.

ສໍາລັບຜູ້ທີ່ຈະມາເປັນຫົວໜ້າຂະແໜງ, ຮອງຫົວໜ້າຂະແໜງກົກກັນ ແມ່ນອົງການປົກຄອງຂັ້ນແຂວງ ເປັນຜູ້ພິຈາລະນາຕົກລົງ ຕາມການສະເໜີ ຂອງຫົວໜ້າຄະນະຄຸ້ມຄອງດ່ານສາກົນ.

## ໝວດທີ 2
## ຄະນະຄຸ້ມຄອງດ່ານທ້ອງຖິ່ນ

### ມາດຕາ 35 ທີ່ຕັ້ງ ແລະ ພາລະບົດບາດ ຂອງຄະນະຄຸ້ມຄອງດ່ານທ້ອງຖິ່ນ

ຄະນະຄຸ້ມຄອງດ່ານທ້ອງຖິ່ນ ແມ່ນການຈັດຕັ້ງໜຶ່ງ ຂຶ້ນກັບອົງການປົກຄອງຂັ້ນເມືອງ ທີ່ມີດ່ານຕັ້ງຢູ່ ແລະ ຂຶ້ນກັບແຂວງ, ນະຄອນຫຼວງ ໂດຍກົງທາງດ້ານວິຊາສະເພາະ, ມີຖານະເທົ່າກັບບັນດາຫ້ອງການຂັ້ນເມືອງ ແລະ ມີພາລະບົດບາດໃນການບໍລິຫານ, ຄຸ້ມຄອງ ແລະ ພັດທະນາດ່ານ ເພື່ອຮັບປະກັນໃຫ້ບັນດາໜ່ວຍງານຄຸ້ມຄອງລັດທາງດ້ານວິຊາສະເພາະ ໄດ້ມີການເຄື່ອນໄຫວຢ່າງຄ່ອງຕົວ ແລະ ອໍານວຍຄວາມສະດວກ ໃຫ້ແກ່ຜູ້ໂດຍສານ, ຍານພາຫະນະ ແລະ ເຄື່ອງຂອງ ເຂົ້າ-ອອກ ດ່ານ ຕາມທີ່ກໍານົດໃນ ມາດຕາ 10 ໃຫ້ມີຄວາມສະດວກວ່ອງໄວ, ໂປ່ງໃສ, ເປັນທໍາ, ສະຫງົບ, ປອດໄພ ແລະ ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

### ມາດຕາ 36 ສິດ ແລະ ໜ້າທີ່ ຂອງຄະນະຄຸ້ມຄອງດ່ານທ້ອງຖິ່ນ

ຄະນະຄຸ້ມຄອງດ່ານທ້ອງຖິ່ນມີສິດ ແລະ ໜ້າທີ່ຕົ້ນຕໍ ດັ່ງນີ້:

1. ຄົ້ນຄວ້າ, ເຊື່ອມຊຶມ, ກໍາແໜ້ນ ແລະ ຈັດຕັ້ງປະຕິບັດກົດໝາຍ, ລະບຽບການ ແລະ ນິຕິກໍາຕ່າງໆ ຂອງລັດກ່ຽວກັບວຽກງານຄຸ້ມຄອງດ່ານ;
2. ອໍານວຍຄວາມສະດວກໃຫ້ເຈົ້າໜ້າທີ່ກ່ຽວຂ້ອງ ກວດກາເອກະສານຂອງຜູ້ໂດຍສານ, ຍານພາຫະນະ ແລະ ສິນຄ້າ ເຄື່ອງຂອງ ທີ່ເຂົ້າ-ອອກ ດ່ານ ໃຫ້ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ, ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ;
3. ໂຄສະນາ ແລະ ເຜີຍແຜ່ລະບຽບການເຂົ້າ-ອອກດ່ານ, ການເກັບຄ່າທໍານຽມ ແລະ ຄ່າບໍລິການຕ່າງໆ;
4. ຄຸ້ມຄອງການເຂົ້າ-ອອກ ແລະ ການເຄື່ອນໄຫວ ຂອງເຈົ້າໜ້າທີ່ ແລະ ພະນັກງານຮັບໃຊ້ປະຈໍາດ່ານ;
5. ຕິດຕາມ, ກວດກາ ແລະ ຈັດຕັ້ງປະຕິບັດວຽກພັກ ແລະ ພະນັກງານ ຢູ່ດ່ານ ຂອງຕົນ;
6. ຄົ້ນຄວ້າ, ສ້າງແຜນການເຄື່ອນໄຫວວຽກງານ ແລະ ແຜນງົບປະມານໃນການຄຸ້ມຄອງບໍລິຫານດ່ານ ປະຈໍາປີ, ແຜນພັດທະນາລະບົບຄຸ້ມຄອງບໍລິຫານຕ່າງໆຂອງດ່ານ ໃນແຕ່ລະໄລຍະ;
7. ອໍານວຍຄວາມສະດວກ ແລະ ຄຸ້ມຄອງ ບັນດາຫົວໜ່ວຍທຸລະກິດ ທີ່ດໍາເນີນທຸລະກິດ ຢູ່ໃນຂອບເຂດດ່ານ ພາຍຫຼັງທີ່ໄດ້ຮັບການຕົກລົງອະນຸມັດ ຈາກ ແຂວງ, ນະຄອນຫຼວງ;
8. ຄຸ້ມຄອງ, ນໍາໃຊ້, ປົກປັກຮັກສາ, ສ້ອມແປງ ແລະ ອະນາໄມ ອາຄານ, ສາງ, ຫ້ອງການ, ເດີ່ນຈອດລົດ, ເສັ້ນທາງ, ລະບົບໄອທີ, ໂທລະຄົມມະນາຄົມ ແລະ ການສື່ສານ, ໄຟຟ້າແສງສະຫວ່າງ, ໄຟຟ້າສໍາຮອງ, ນໍ້າປະປາ, ລະບົບລະບາຍນໍ້າ, ການມອດໄຟ, ກ້ອງວົງຈອນປິດ, ປະຕູເຂົ້າ-ອອກ, ປ້ອມຍາມ, ຮົ້ວ, ກໍາແພງ, ເຂດຂຽວ, ສວນດອກໄມ້, ວັດຖຸອຸປະກອນ, ສິ່ງກໍ່ສ້າງ ແລະ ອື່ນໆ ຢູ່ໃນຂອບເຂດດ່ານ ໃຫ້ມີຄວາມສະອາດ, ສວຍງາມ ແລະ ໃຊ້ງານໄດ້ ເປັນປົກກະຕິ;
9. ສ້າງແຜນປ້ອງກັນ ແລະ ແກ້ໄຂໃນກໍລະນີ ທີ່ເກີດໄພພິບັດທາງທໍາມະຊາດ ແລະ ເຫດການສຸກເສີນ;
10. ຄົ້ນຄ້ວາ ສະເໜີຂັ້ນເທິງປັບປຸງກ່ຽວກັບຄ່າທໍານຽມ ແລະ ຄ່າບໍລິການຕ່າງໆ ທີ່ເຫັນວ່າບໍ່ສອດຄ່ອງ ກັບສະພາບຄວາມເປັນຈິງ ໃນການຂະຫຍາຍຕົວ ຂອງເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ;

11. ພົວພັນຮ່ວມມື ກັບບັນດາຂະແໜງການພາຍໃນ, ຕ່າງປະເທດ ແລະ ຄູ່ດ່ານ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງ, ບົດບັນທຶກຄວາມເຂົ້າໃຈ, ສັນຍາ, ອະນຸສັນຍາສອງຝ່າຍ ແລະ ຫຼາຍຝ່າຍ ທີ່ເປັນພາຄີ; ຍາດແຍ່ງ ແລະ ຖອດຖອນບົດຮຽນກັບຕ່າງປະເທດ ກ່ຽວກັບວຽກງານຄຸ້ມຄອງດ່ານ;
12. ສະຫຼຸບ ແລະ ລາຍງານ ການເກັບລາຍຮັບ ແລະ ການເຄື່ອນໄຫວຮອບດ້ານ ພາຍໃນດ່ານ ໃຫ້ອົງການປົກຄອງຂັ້ນເມືອງ ແລະ ແຂວງ ຢ່າງເປັນປົກກະຕິ;
13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

### ມາດຕາ 37 ໂຄງປະກອບກົງຈັກການຈັດຕັ້ງ

ໂຄງປະກອບກົງຈັກການຈັດຕັ້ງ ຂອງຄະນະຄຸ້ມຄອງດ່ານທ້ອງຖິ່ນ ປະກອບມີ ດັ່ງນີ້:

1. ໜ່ວຍງານບໍລິຫານ;
2. ໜ່ວຍງານກວດຄົນເຂົ້າ-ອອກ ເມືອງ,
3. ໜ່ວຍງານພາສີ.

ກໍລະນີ ມີຄວາມຈຳເປັນ ສາມາດສ້າງຕັ້ງໜ່ວຍງານອື່ນ ຕາມຄວາມເໝາະສົມ.

### ມາດຕາ 38 ສິດ ແລະ ໜ້າທີ່ ຂອງບັນດາໜ່ວຍງານ

ສິດ ແລະ ໜ້າທີ່ ຂອງບັນດາໜ່ວຍງານ ປະຈຳຢູ່ດ່ານ ແມ່ນປະຕິບັດຕາມມາດຕາ 30 ຫາ 33 ຂອງດຳລັດ ສະບັບນີ້.

### ມາດຕາ 39 ໂຄງປະກອບບຸກຄະລາກອນ ຂອງຄະນະຄຸ້ມຄອງດ່ານທ້ອງຖິ່ນ

ໂຄງປະກອບບຸກຄະລາກອນ ຂອງຄະນະຄຸ້ມຄອງດ່ານທ້ອງຖິ່ນ ປະກອບມີ ດັ່ງນີ້:

1. ຫົວໜ້າຄະນະຄຸ້ມຄອງດ່ານ ຈຳນວນ 01 ທ່ານ, ມີຕຳແໜ່ງບໍລິຫານທຽບເທົ່າຫົວໜ້າຫ້ອງການຂັ້ນເມືອງ (ຕຳແໜ່ງບໍລິຫານປະເພດ 04) ແລະ ມີຮອງຫົວໜ້າຄະນະຄຸ້ມຄອງດ່ານ ຈຳນວນໜຶ່ງ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງໂດຍເຈົ້າເມືອງ, ເຈົ້ານະຄອນ, ຫົວໜ້າເທດສະບານ ບ່ອນທີ່ດ່ານຕັ້ງຢູ່;
2. ຫົວໜ້າໜ່ວຍງານ, ຮອງຫົວໜ້າໜ່ວຍງານ ແລະ ວິຊາການ ບໍລິຫານ ຕາມການກຳນົດຕຳແໜ່ງງານ, ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງໂດຍ ເຈົ້າເມືອງ, ເຈົ້ານະຄອນ, ຫົວໜ້າເທດສະບານ ຕາມການສະເໜີ ຂອງຫົວໜ້າຄະນະຄຸ້ມຄອງດ່ານທ້ອງຖິ່ນ;
3. ຫົວໜ້າໜ່ວຍງານ, ຮອງຫົວໜ້າໜ່ວຍງານ ແລະ ວິຊາການ ກວດຄົນເຂົ້າ-ອອກ ເມືອງ, ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບຂັ້ນແຂວງ;
4. ຫົວໜ້າໜ່ວຍງານ, ຮອງຫົວໜ້າໜ່ວຍງານ ແລະ ວິຊາການ ພາສີ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍລັດຖະມົນຕີ ກະຊວງການເງິນ ໂດຍການປະສານສົມທົບກັບ ອົງການປົກຄອງທ້ອງຖິ່ນ ບ່ອນທີ່ດ່ານຕັ້ງຢູ່.

ການຄົ້ນຄວ້າ ປະກອບບຸກຄະລາກອນ ແລະ ກຳນົດຕຳແໜ່ງງານ ເຂົ້າໃນດ່ານທ້ອງຖິ່ນ ແມ່ນເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ເປັນຜູ້ຕົກລົງ ໂດຍອີງໃສ່ ທີ່ຕັ້ງ, ຄວາມສຳຄັນ, ຈຳນວນຄົນເຂົ້າ-ອອກ ແລະ ບໍລິມາດແລກປ່ຽນສິນຄ້າ ເຄື່ອງຂອງ ຢູ່ໃນແຕ່ລະດ່ານຊາຍແດນທ້ອງຖິ່ນ.

### ໝວດທີ 3
### ຄະນະຄຸ້ມຄອງດ່ານປະເພນີ

**ມາດຕາ 40 ໂຄງປະກອບກົງຈັກການຈັດຕັ້ງ**

ໂຄງປະກອບກົງຈັກການຈັດຕັ້ງ ຂອງຄະນະຄຸ້ມຄອງດ່ານປະເພນີ ປະກອບມີ ດັ່ງນີ້:

1. ກວດຄົນເຂົ້າ-ອອກ ເມືອງ;
2. ພາສີ(ກໍລະນີ ດ່ານປະເພນີ ມີການຈັດຕັ້ງຕະຫຼາດນັດ ແລະ ມີການແລກປ່ຽນສິນຄ້າ).

**ມາດຕາ 41 ສິດ ແລະ ໜ້າທີ່ ຂອງແຕ່ລະພາກສ່ວນ**

ສິດ ແລະ ໜ້າທີ່ ຂອງພາກສ່ວນປະຈຳຢູ່ດ່ານປະເພນີ ແມ່ນປະຕິບັດຕາມມາດຕາ 31 ແລະ 32 ຂອງດຳລັດ ສະບັບນີ້.

**ມາດຕາ 42 ໂຄງປະກອບບຸກຄະລາກອນ ຂອງຄະນະຄຸ້ມຄອງດ່ານປະເພນີ**

ໂຄງປະກອບບຸກຄະລາກອນ ຂອງຄະນະຄຸ້ມຄອງດ່ານປະເພນີ ປະກອບມີ ດັ່ງນີ້:

1. ຄະນະຄຸ້ມຄອງດ່ານປະເພນີ ປະກອບມີຫົວໜ້າ ແລະ ພະນັກງານ ຈຳນວນໜຶ່ງ;
2. ຫົວໜ້າຄະນະຄຸ້ມຄອງດ່ານປະເພນີ ແມ່ນຜູ້ຮັບຜິດຊອບວຽກງານກວດຄົນເຂົ້າ-ອອກເມືອງ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ບ່ອນທີ່ດ່ານຕັ້ງຢູ່ ຕາມການສະເໜີ ຂອງກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນເມືອງ;
3. ເຈົ້າໜ້າທີ່ຮັບຜິດຊອບວຽກງານພາສີ ຢູ່ດ່ານປະເພນີ ຖືກແຕ່ງຕັ້ງ ແລະ ມອບຫມາຍໃຫ້ໄປປະຕິບັດໜ້າທີ່ ໂດຍພະແນກການເງິນຂັ້ນແຂວງ ຕາມສະພາບຈຸດພິເສດຕົວຈິງ ຂອງແຕ່ລະດ່ານປະເພນີ ແລະ ລະບຽບການກ່ຽວຂ້ອງ ກໍລະນີ ມີການຈັດຕັ້ງຕະຫຼາດນັດ ແລະ ມີການແລກປ່ຽນສິນຄ້າ.

## ພາກທີ V
## ການເງິນ ຂອງດ່ານເຂົ້າ-ອອກ ສປປ ລາວ

**ມາດຕາ 43 ງົບປະມານການເງິນ ຂອງຄະນະຄຸ້ມຄອງດ່ານເຂົ້າ-ອອກ ສປປ ລາວ**

ຄະນະຄຸ້ມຄອງດ່ານສາກົນ ມີງົບປະມານຮັບໃຊ້ບໍລິຫານ ເປັນຂອງຕົນເອງ, ເປັນຫົວໜ່ວຍງົບປະມານໜຶ່ງ ຂຶ້ນກັບອົງການປົກຄອງຂັ້ນແຂວງ ບ່ອນທີ່ດ່ານຕັ້ງຢູ່ ຄືກັນກັບບັນດາພະແນກການຕ່າງໆຂອງແຂວງ.

ຄະນະຄຸ້ມຄອງ ດ່ານທ້ອງຖິ່ນ ແລະ ດ່ານປະເພນີ ມີງົບປະມານຮັບໃຊ້ບໍລິຫານ ເປັນຂອງຕົນເອງ, ເປັນຫົວໜ່ວຍງົບປະມານໜຶ່ງ ຂຶ້ນກັບອົງການປົກຄອງຂັ້ນເມືອງ ບ່ອນທີ່ດ່ານຕັ້ງຢູ່ ຄືກັນກັບບັນດາຫ້ອງການຕ່າງໆຂອງເມືອງ;

**ມາດຕາ 44 ການກຳນົດລາຍຮັບ-ລາຍຈ່າຍ ບໍລິການວິຊາການ**

ທຸກແຫຼ່ງລາຍຮັບ-ລາຍຈ່າຍ ຈາກຄ່າບໍລິການວິຊາການ ເປັນຕົ້ນ ຄ່າເຊົ່າ, ຄ່າສຳປະທານ ແລະ ລາຍຮັບອື່ນ ຕາມສັນຍາ ທີ່ເກີດຂຶ້ນຢູ່ດ່ານ ໃຫ້ກຳນົດເປັນລາຍຮັບວິຊາການ ແລະ ຈັດຕັ້ງປະຕິບັດ ໃຫ້ສອດຄ່ອງກັບກົດໝາຍ ແລະ ລະບຽບການກ່ຽວຂ້ອງ.

**ມາດຕາ 45 ປະເພດລາຍຮັບ ຢູ່ດ່ານເຂົ້າ-ອອກ ສປປ ລາວ**

ລາຍຮັບງົບປະມານແຫ່ງລັດ ຢູ່ດ່ານ ປະກອບ ມີດັ່ງນີ້:

1. ພາສີ, ອາກອນ, ກອງທຶນຂອງລັດ ແລະ ຄ່າທຳນຽມຕ່າງໆ;

2. ຄ່າບໍລິການວິຊາການ ຂອງຂະແໜງການ;
3. ຄ່າບໍລິການວິຊາການດ່ານເຂົ້າ-ອອກ ສປປ ລາວ, ຄ່າເຊົ່າ. ຄ່າສໍາປະທານ ແລະ ລາຍ ຮັບອື່ນໆ ຕາມສັນຍາ.

**ມາດຕາ 46 ການຄຸ້ມຄອງລາຍຮັບງົບປະມານ ຢູ່ດ່ານເຂົ້າ-ອອກ ສປປ ລາວ**

1. ລາຍຮັບ ພາສີ, ອາກອນ. ກອງທຶນຂອງລັດ ແລະ ຄ່າທໍານຽມຕ່າງໆ ແມ່ນຈັດເກັບ ໃຫ້ຖືກຕ້ອງ ຄົບຖ້ວນ ແລະ ມອບເຂົ້າງົບປະມານ ຕາມກົດໝາຍ ແລະ ລະບຽບການ ກໍານົດ;
2. ຄ່າບໍລິການວິຊາການ ຂອງຂະແໜງການ ຢູ່ດ່ານເຂົ້າ-ອອກ ສປປ ລາວ ຕ້ອງເກັບລວມສູນຢູ່ຈຸດດຽວ ຕາມລະບົບທັນສະໄໝ ໂດຍມອບໃຫ້ເຈົ້າໜ້າທີ່ກ່ຽວຂ້ອງ ເປັນຜູ້ຈັດເກັບ ຕາມກົດໝາຍ ແລະ ລະບຽບການ;
3. ຄ່າເຊົ່າ, ຄ່າສໍາປະທານ ແລະ ລາຍຮັບອື່ນໆ ຕາມສັນຍາ ຢູ່ໃນເຂດຄວາມຮັບຜິດຊອບຂອງດ່ານ ແມ່ນ ຄະນະຄຸ້ມຄອງດ່ານເຂົ້າ-ອອກ ສປປ ລາວ ເປັນຜູ້ຄຸ້ມຄອງຈັດເກັບ ແລະ ມອບເຂົ້າງົບປະມານແຫ່ງລັດ.

**ມາດຕາ 47 ປະເພດລາຍຈ່າຍງົບປະມານ ຢູ່ດ່ານເຂົ້າ-ອອກ ສປປ ລາວ**

ລາຍຈ່າຍງົບປະມານ ຢູ່ດ່ານເຂົ້າ-ອອກ ສປປ ລາວ ມີລາຍຈ່າຍທີ່ຂຶ້ນກັບບັນດາຂະແໜງການສູນກາງ ແລະ ທ້ອງຖິ່ນ ດັ່ງນີ້:

1. ລາຍຈ່າຍເງິນເດືອນ ແລະ ເງິນນະໂຍບາຍຕ່າງໆ ຂອງພະນັກງານ-ລັດຖະກອນ ທີ່ປະຕິບັດໜ້າທີ່ຢູ່ດ່ານເຂົ້າ-ອອກ ສປປ ລາວ ແມ່ນຂຶ້ນກັບງົບປະມານ ຂະແໜງການສູນກາງ ແລະ ອົງການປົກຄອງ ທ້ອງຖິ່ນ;
2. ລາຍຈ່າຍລົງທຶນທີ່ຕິດພັນກັບການກໍ່ສ້າງພື້ນຖານໂຄງລ່າງ ແມ່ນຂຶ້ນກັບງົບປະມານ ຂອງຂະແໜງການ ໂຍທາທິການ ແລະ ຂົນສົ່ງ;
3. ລາຍຈ່າຍສໍາລັບອຸປະກອນຮັບໃຊ້ການປະຕິບັດວຽກງານວິຊາສະເພາະ ຂອງຂະແໜງການແມ່ນຂຶ້ນກັບ ງົບປະມານ ຂອງຂະແໜງການສູນກາງ ແລະ ທ້ອງຖິ່ນ;
4. ລາຍຈ່າຍບໍລິຫານເຊັ່ນ: ຄ່າໄຟຟ້າ, ນໍ້າປະປາ, ໂທລະສັບຕັ້ງໂຕະ, ອະນາໄມ, ສ້ອມແປງນ້ອຍ, ບໍາລຸງຮັກສາ, ວັດຖຸອຸປະກອນຮັບໃຊ້ຫ້ອງການບໍລິຫານ ແລະ ອື່ນໆ ແມ່ນຂຶ້ນກັບງົບປະມານ ຂອງອົງການປົກຄອງ ທ້ອງຖິ່ນ.

**ມາດຕາ 48 ການຂຶ້ນແຜນງົບປະມານລາຍຈ່າຍ ຢູ່ດ່ານເຂົ້າ-ອອກ ສປປ ລາວ**

1. ໃນການຂຶ້ນແຜນງົບປະມານປະຈໍາປີ ຂອງດ່ານເຂົ້າ-ອອກ ສປປ ລາວ ຕ້ອງຄິດໄລ່, ໄລ່ລຽງລາຍຮັບ, ລາຍຈ່າຍ ສັງລວມເຂົ້າໃນແຜນງົບປະມານແຫ່ງລັດປະຈໍາປີ, ປະຕິບັດລະບຽບການເງິນແຫ່ງລັດ ແລະ ພາຍໃຕ້ ການຄຸ້ມຄອງ ຂອງຂະແໜງການເງິນ, ຂະແໜງການໂຍທາທິການ ແລະ ຂົນສົ່ງ ແລະ ອົງການປົກຄອງ ທ້ອງຖິ່ນ;
2. ດ່ານເຂົ້າ-ອອກ ສປປ ລາວ ມີໜ້າທີ່ສ້າງແຜນງົບປະມານລາຍຈ່າຍ ເຊັ່ນ: ຄ່າໄຟຟ້າ, ນໍ້າປະປາ, ໂທລະສັບ ຕັ້ງໂຕະ, ອະນາໄມ, ສ້ອມແປງນ້ອຍ, ບໍາລຸງຮັກສາ, ວັດຖຸອຸປະກອນ ຮັບໃຊ້ຫ້ອງການບໍລິຫານດ່ານ ແລະ ອື່ນໆ ປະຈໍາປີ ສະເໜີອົງການປົກຄອງຂັ້ນແຂວງ ແລະ ຂັ້ນເມືອງ ທີ່ດ່ານຕັ້ງຢູ່ ຕາມການແບ່ງຂັ້ນຄຸ້ມຄອງ.

## ພາກທີ VI
## ການດໍາເນີນທຸລະກິດ ຢູ່ຂອບເຂດດ່ານເຂົ້າ-ອອກ ສປປ ລາວ

**ມາດຕາ 49 ການດໍາເນີນທຸລະກິດ ຢູ່ດ່ານລາກົນ**

ການດໍາເນີນທຸລະກິດ ຢູ່ດ່ານເຂົ້າ-ອອກ ສປປ ລາວ ໃຫ້ດໍາເນີນການ ດັ່ງນີ້:

1. ປະຕິບັດຕາມ ກົດໝາຍວ່າດ້ວຍຊັບສິນຂອງລັດ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ;

2. ການອະນຸຍາດດຳເນີນທຸລະກິດ ຢູ່ຂອບເຂດດ່ານ ແມ່ນກະຊວງການເງິນ ເປັນຜູ້ຄົ້ນຄວ້າອະນຸມັດ ຕາມຂອບເຂດສິດ ແລະ ພາລະບົດບາດ;
3. ລາຍຮັບ ຈາກການດຳເນີນທຸລະກິດ ຢູ່ຂອບເຂດດ່ານ ແມ່ນມອບເຂົ້າງົບປະມານ ແຫ່ງລັດ.

**ມາດຕາ 50 ການດຳເນີນທຸລະກິດ ຢູ່ດ່ານ ທ້ອງຖິ່ນ ແລະ ປະເພນີ**

ການດຳເນີນທຸລະກິດ ຢູ່ດ່ານ ທ້ອງຖິ່ນ ແລະ ປະເພນີ ໃຫ້ດຳເນີນການ ດັ່ງນີ້:

1. ປະຕິບັດຕາມ ກົດໝາຍວ່າດ້ວຍຊັບສິນຂອງລັດ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ;
2. ການອະນຸຍາດດຳເນີນທຸລະກິດ ຢູ່ຂອບເຂດດ່ານທ້ອງຖິ່ນ ແລະ ດ່ານປະເພນີ ແມ່ນແຂວງ ຫຼື ນະຄອນຫຼວງ ບ່ອນທີ່ດ່ານຕັ້ງຢູ່ເປັນຜູ້ຄົ້ນຄວ້າຕົກລົງອະນຸມັດ ຫຼື ມອບໃຫ້ເມືອງເປັນຜູ້ຕົກລົງອະນຸມັດຕາມຄວາມເໝາະສົມ;
3. ລາຍຮັບ ຈາກການດຳເນີນທຸລະກິດ ຢູ່ຂອບເຂດດ່ານທ້ອງຖິ່ນ ແລະ ດ່ານປະເພນີ ແມ່ນມອບເຂົ້າງົບປະມານ ແຫ່ງລັດ.

**ມາດຕາ 51 ການເປີດຕະຫຼາດນັດຊາຍແດນ**

ການເປີດຕະຫຼາດນັດຊາຍແດນ ຢູ່ດ່ານປະເພນີ ແມ່ນການກຳນົດສະຖານທີ່, ວັນ ແລະ ເວລາ ເພື່ອໃຫ້ປະຊາຊົນທີ່ດຳລົງຊີວິດຢູ່ເຂດຊາຍແດນ ມີການແລກປ່ຽນຊື້-ຂາຍສິນຄ້າ ແລະ ບໍລິການ ຕາມການຕົກລົງເຫັນດີ ຂອງອົງການປົກຄອງທ້ອງຖິ່ນ ຂັ້ນແຂວງ ໂດຍການສະເໜີ ຂອງອົງການປົກຄອງ ຂັ້ນເມືອງ.

ລາຍຮັບທີ່ໄດ້ຈາກການເປີດຕະຫຼາດນັດຊາຍແດນ ນອກຈາກລາຍຮັບທີ່ເປັນພັນທະ ຂອງງົບປະມານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍງົບປະມານແຫ່ງລັດ ແມ່ນມອບເຂົ້າງົບປະມານແຫ່ງລັດ.

## ພາກທີ VII
## ຂໍ້ຫ້າມ

**ມາດຕາ 52 ຂໍ້ຫ້າມສຳລັບພະນັກງານ ແລະ ເຈົ້າໜ້າທີ່ປະຈຳດ່ານ**

ຫ້າມພະນັກງານ ແລະ ເຈົ້າໜ້າທີ່ປະຈຳດ່ານ ມີພຶດຕິກຳ ດັ່ງນີ້:

1. ເປີດເຜີຍຄວາມລັບຂອງລັດ, ທາງລັດຖະການ ແລະ ຂໍ້ມູນທີ່ເປັນຄວາມລັບ ຂອງດ່ານ;
2. ກົດໜ່ວງ, ຖ່ວງດຶງ, ປອມແປງເອກະສານຕ່າງໆ, ຂາດຄວາມຮັບຜິດຊອບຕໍ່ວຽກງານທີ່ໄດ້ຮັບມອບໝາຍ;
3. ສວຍໃຊ້ໜ້າທີ່ຕຳແໜ່ງ, ໃຊ້ຄວາມຮຸນແຮງ, ບັງຄັບນາບຂູ່, ທວງເອົາ, ຂໍເອົາ ຫຼື ຮັບສິນບົນ ຊຶ່ງກໍ່ໃຫ້ເກີດຄວາມເສຍຫາຍແກ່ຜົນປະໂຫຍດ ຂອງບຸກຄົນ, ການຈັດຕັ້ງ, ລວມໝູ່ ແລະ ລັດ;
4. ປົກປ້ອງ ຫຼື ສົມຮູ້ຮ່ວມຄິດ ກັບ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ພາກສ່ວນອື່ນທີ່ລະເມີດຕໍ່ກົດໝາຍ;
5. ພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 53 ຂໍ້ຫ້າມສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນທີ່ກ່ຽວຂ້ອງ**

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນທີ່ກ່ຽວຂ້ອງ ມີພຶດຕິກຳ ດັ່ງນີ້:

1. ປະຕິເສດການສະໜອງຂໍ້ມູນ ກ່ຽວກັບການກະທຳຜິດ ຫຼື ການລະເມີດກົດໝາຍ ກ່ຽວກັບວຽກງານການຄຸ້ມຄອງດ່ານເຂົ້າ-ອອກ ສປປ ລາວ;
2. ຮ່ວມກັນກະທຳຜິດ, ປົກປິດ ແລະ ຊຸກເຊື່ອງຜູ້ກະທຳຜິດ ກ່ຽວກັບວຽກງານການຄຸ້ມຄອງດ່ານ;

3. ໃຫ້ ແລະ ຮັບສິນບົນ, ຄ່າຈ້າງລາງວັນ, ສິນຮູ້ຮ່ວມຄິດ ເອົາເງິນຂອງລັດ;
4. ໝິ່ນປະໝາດ, ບັງຄັບນາບຂູ່, ທຳຮ້າຍຮ່າງກາຍພະນັກງານ ແລະ ເຈົ້າໜ້າທີ່ປະຈຳດ່ານ;
5. ພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ພາກທີ VIII
## ການຄຸ້ມຄອງ ແລະ ກວດກາວຽກງານດ່ານເຂົ້າ-ອອກ ສປປ ລາວ

**ມາດຕາ 54 ການຄຸ້ມຄອງດ່ານເຂົ້າ-ອອກ ສປປ ລາວ**

ລັດຖະບານ ເປັນຜູ້ຄຸ້ມຄອງດ່ານເຂົ້າ-ອອກ ສປປ ລາວ ຢ່າງລວມສູນ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ບັນດາກະຊວງ, ອົງການ ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ເປັນຜູ້ຮັບຜິດຊອບ ຊຶ່ງປະກອບດ້ວຍ:

1. ຂະແໜງປ້ອງກັນຄວາມສະຫງົບ;
2. ຂະແໜງການເງິນ;
3. ຂະແໜງກະສິກຳ ແລະ ປ່າໄມ້;
4. ຂະແໜງສາທາລະນະສຸກ;
5. ຂະແໜງການຕ່າງປະເທດ;
6. ຂະແໜງໂຍທາທິການ ແລະ ຂົນສົ່ງ;
7. ຂະແໜງປ້ອງກັນປະເທດ;
8. ອົງການປົກຄອງທ້ອງຖິ່ນ.

### ໝວດທີ 1
### ຂະແໜງປ້ອງກັນຄວາມສະຫງົບ

**ມາດຕາ 55 ສິດ ແລະ ໜ້າທີ່ ຂອງກະຊວງປ້ອງກັນຄວາມສະຫງົບ**

ກະຊວງປ້ອງກັນຄວາມສະຫງົບ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ວາງແຜນການ ແລະ ກຳແໜັນສະພາບການຮອບດ້ານວຽກງານເຂົ້າ-ອອກ ສປປ ລາວ ໃນຂອບເຂດທົ່ວປະເທດ;
2. ຄຸ້ມຄອງ, ຊີ້ນຳ, ບັນຊາ, ຕິດຕາມ, ກວດກາ ແລະ ປະເມີນຜົນວຽກງານເຂົ້າ-ອອກ ສປປ ລາວ ແລະ ບັນດາດ່ານ ໃນຂອບເຂດທົ່ວປະເທດ ເພື່ອເຮັດໃຫ້ການເຂົ້າ-ອອກ ສປປ ລາວ ມີຄວາມສະດວກ, ວ່ອງໄວ, ຮັບປະກັນຄວາມສະຫງົບ, ຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍ;
3. ເກັບກຳສະພາບ ຄວາມສະຫງົບ, ຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍ ຂອງການເຂົ້າ-ອອກ ຂອງຜູ້ໂດຍສານ, ຍານພາຫະນະ ແລະ ສິນຄ້າ ເຄື່ອງຂອງ ຢູ່ດ່ານເຂົ້າ-ອອກ ສປປ ລາວ ໃນຂອບເຂດທົ່ວປະເທດ ແລ້ວລາຍງານຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເປັນແຕ່ລະໄລຍະ ຢ່າງເປັນປົກກະຕິ;
4. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຫົວໜ້າ ແລະ ວິຊາການ ຕຳຫຼວດກວດຄົນເຂົ້າ-ອອກເມືອງ ປະຈຳດ່ານສາກົນ;
5. ໃຫ້ຢຸດ ຫຼື ໂຈະການເດີນທາງຂອງຜູ້ໂດຍສານ, ຍານພາຫະນະ ເມື່ອເຈົ້າໜ້າທີ່ຕຳຫຼວດກວດຄົນເຂົ້າ-ອອກເມືອງ ມີຂໍ້ມູນຫຼັກຖານ ກ່ຽວກັບການລະເມີດກົດໝາຍ ແລະ ລະບຽບການ ລວມທັງວັດຖຸອຸປະກອນ ແລະ ສິ່ງຂອງຕ່າງໆ ທີ່ເປັນອັນຕະລາຍ;

6. ຊີ້ນຳການ ອອກປື້ມຜ່ານແດນ, ໃບຜ່ານແດນໃຫ້ພົນລະເມືອງລາວ ທີ່ມີຈຸດປະສົງເດີນທາງເຂົ້າ-ອອກ ຕາມດ່ານ ທີ່ຕິດຈອດກັບ ສປປ ລາວ ໃນຂອບເຂດທົ່ວປະເທດ;
7. ພົວພັນ, ຮ່ວມມືກັບຕ່າງປະເທດ ແລະ ສາກົນ ກ່ຽວກັບວຽກງານເຂົ້າ-ອອກ ສປປ ລາວ ຕາມການມອບໝາຍ;
8. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານເຂົ້າ-ອອກ ສປປ ລາວ ຕໍ່ຂັ້ນເທິງ ຢ່າງເປັນປົກກະຕິ;
9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 56 ສິດ ແລະ ໜ້າທີ່ ຂອງກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນແຂວງ**

ກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນແຂວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄຸ້ມຄອງ, ຊີ້ນຳ, ບັນຊາ, ຕິດຕາມ, ກວດກາ ແລະ ປະເມີນຜົນ ວຽກງານເຂົ້າ-ອອກ ສປປ ລາວ ແລະ ບັນດາດ່ານ ຢູ່ໃນແຂວງ ແລະ ນະຄອນຫຼວງ;
2. ກວດກາເອກະສານຂໍອອກ ຫຼື ຕໍ່ປື້ມຜ່ານແດນ, ໃບຜ່ານແດນ ໃຫ້ພົນລະເມືອງລາວ ເພື່ອສະເໜີຂັ້ນເທິງພິຈາລະນາ;
3. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຮອງຫົວໜ້າ ແລະ ວິຊາການ ຕຳຫຼວດກວດຄົນເຂົ້າ-ອອກເມືອງ ປະຈຳດ່ານສາກົນ ແລະ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຫົວໜ້າ, ຮອງຫົວໜ້າ ແລະ ວິຊາການ ຕຳຫຼວດກວດຄົນເຂົ້າ-ອອກເມືອງ ປະຈຳດ່ານທ້ອງຖິ່ນ;
4. ໃຫ້ຢຸດ ຫຼື ໂຈະການເດີນທາງ ຂອງຄົນ, ຍານພາຫະນະ ເມື່ອເຈົ້າໜ້າທີ່ຕຳຫຼວດກວດຄົນເຂົ້າ-ອອກເມືອງມີຂໍ້ມູນຫຼັກຖານ ກ່ຽວກັບການລະເມີດກົດໝາຍ ແລະ ລະບຽບການ ລວມທັງວັດຖຸປະກອບ ແລະ ສິ່ງຂອງຕ່າງໆ ທີ່ເປັນອັນຕະລາຍ;
5. ພົວພັນ, ຮ່ວມມືກັບຕ່າງປະເທດ ແລະ ສາກົນ ກ່ຽວກັບວຽກງານເຂົ້າ-ອອກ ສປປ ລາວ ຕາມການມອບໝາຍ;
6. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານເຂົ້າ-ອອກ ສປປ ລາວ ຕໍ່ຂັ້ນເທິງ ຢ່າງເປັນປົກກະຕິ;
7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 57 ສິດ ແລະ ໜ້າທີ່ ຂອງກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນເມືອງ**

ກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນເມືອງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄຸ້ມຄອງ, ຊີ້ນຳ, ບັນຊາ, ຕິດຕາມ, ກວດກາ ແລະ ປະເມີນຜົນວຽກງານເຂົ້າ-ອອກ ສປປ ລາວ ແລະດ່ານປະເພນີ ຢູ່ໃນເມືອງ, ນະຄອນ, ເທດສະບານ ຂອງຕົນ;
2. ກວດກາເອກະສານຂໍອອກໃບຜ່ານແດນໃຫ້ພົນລະເມືອງລາວຢູ່ເມືອງ, ເທດສະບານ ຫຼື ນະຄອນ ທີ່ມີຊາຍແດນຕິດຈອດ ເພື່ອສະເໜີຂັ້ນເທິງ ພິຈາລະນາ;
3. ສະເໜີ ເຈົ້າເມືອງ, ເຈົ້ານະຄອນ, ຫົວໜ້າເທດສະບານ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງຫົວໜ້າຕຳຫຼວດກວດຄົນເຂົ້າ-ອອກເມືອງ ປະຈຳດ່ານປະເພນີ;
4. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ວິຊາການ ຕຳຫຼວດກວດຄົນເຂົ້າ-ອອກເມືອງ ປະຈຳດ່ານປະເພນີ;
5. ໃຫ້ຢຸດ ຫຼື ໂຈະການເດີນທາງຂອງຄົນ, ຍານພາຫະນະ ເມື່ອເຈົ້າໜ້າທີ່ຕຳຫຼວດກວດຄົນເຂົ້າ-ອອກ ເມືອງມີຂໍ້ມູນຫຼັກຖານ ກ່ຽວກັບການລະເມີດກົດໝາຍ ແລະ ລະບຽບການ ລວມທັງວັດຖຸປະກອບແລະ ສິ່ງຂອງຕ່າງໆ ທີ່ເປັນອັນຕະລາຍ;
6. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານເຂົ້າ-ອອກ ສປປ ລາວ ຕໍ່ຂັ້ນເທິງ ຢ່າງເປັນ ປົກກະຕິ;
7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 58 ກຳນົດໄລຍະປະຈຳການຂອງເຈົ້າໜ້າທີ່ ຂະແໜງປ້ອງກັນຄວາມສະຫງົບປະຈຳດ່ານ**

ຫົວໜ້າ ແລະ ຮອງຫົວໜ້າຕຳຫຼວດກວດຄົນເຂົ້າ-ອອກເມືອງ ແລະ ເຈົ້າໜ້າທີ່ຂະແໜງປ້ອງກັນຄວາມສະຫງົບ ປະຈຳດ່ານ ຕ້ອງປະຕິບັດຕາມລະບຽບການສັບຊ້ອນປ່ຽນແທນໜ້າທີ່ ຕາມກົດໝາຍ ແລະ ລະບຽບການສະເພາະ ຂອງກະຊວງປ້ອງກັນຄວາມສະຫງົບ.

## ໝວດທີ 2
## ຂະແໜງການເງິນ

**ມາດຕາ 59 ສິດ ແລະ ໜ້າທີ່ ຂອງກະຊວງການເງິນ**

ກະຊວງການເງິນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເປັນເສນາທິການໃຫ້ລັດຖະບານ ໃນການຄົ້ນຄວ້າ ແລະ ສະເໜີ ນະໂຍບາຍ, ນິຕິກຳ, ແຜນຍຸດທະສາດ ກ່ຽວກັບວຽກງານພາສີ ຢູ່ດ່ານ ໃນແຕ່ລະໄລຍະ;
2. ເປັນເຈົ້າການຄົ້ນຄວ້າ ແລະ ກຳນົດ ມາດຕະການ, ລະບຽບການ, ຄູ່ມືປະຕິບັດ ແລະ ຄຳແນະນຳດ້ານ ວິຊາການ ໃນວຽກງານພາສີ ຢູ່ດ່ານເຂົ້າ-ອອກ ສປປ ລາວ;
3. ຄົ້ນຄວ້າ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຫົວໜ້າ, ຮອງຫົວໜ້າ ແລະ ວິຊາການ ພາສີ ປະຈຳດ່ານສາກົນ ແລະ ດ່ານທ້ອງຖິ່ນ;
4. ພັດທະນາລະບົບການເກັບກຳຂໍ້ມູນ, ວິເຄາະ ແລະ ເຜີຍແຜ່ຂໍ້ມູນ ກ່ຽວກັບວຽກງານພາສີ;
5. ຮ່ວມມື ແລະ ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການພັດທະນາດ່ານ, ການສ້າງຄວາມເຂັ້ມແຂງໃຫ້ແກ່ການຈັດເກັບພາສີ ແລະ ລາຍຮັບອື່ນ ຢູ່ດ່ານ ໃຫ້ຖືກຕ້ອງ, ຄົບຖ້ວນ, ວ່ອງໄວ ແລະ ທັນສະໄໝ;
6. ຄົ້ນຄວ້າ ກຳນົດ ແລະ ມີນິຕິກຳ ລະອຽດ ກ່ຽວກັບການແບ່ງຂັ້ນຄຸ້ມຄອງ ຂອງຂະແໜງການເງິນ ຢູ່ດ່ານ.

**ມາດຕາ 60 ສິດ ແລະ ໜ້າທີ່ ຂອງພະແນກການເງິນ ຂັ້ນແຂວງ ແລະ ຫ້ອງການ ຂັ້ນເມືອງ**

ພະແນກການເງິນ ຂັ້ນແຂວງ ແລະ ຫ້ອງການ ຂັ້ນເມືອງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ໂຄສະນາເຜີຍແຜ່ ຈັດຕັ້ງປະຕິບັດນະໂຍບາຍ, ກົດໝາຍ ແລະ ນິຕິກຳອື່ນ ທີ່ພົວພັນກັບວຽກພາສີ;
2. ປະສານສົມທົບກັບອົງການປົກຄອງທ້ອງຖິ່ນ ໃນວຽກງານພະນັກງານ, ການຈັດຕັ້ງ ແລະ ການເຄື່ອນໄຫວຂອງພະນັກງານ ໃນພະແນກການເງິນ ແລະ ພາສີ ໃນການຈັດຕັ້ງປະຕິບັດໜ້າທີ່ຄວາມຮັບຜິດຊອບ ໃຫ້ມີຄວາມ ເປັນເອກະພາບ ແລະ ກົມກຽວກັນ;
3. ຄົ້ນຄວ້າ ສະເໜີ ກະຊວງການເງິນ ແຕ່ງຕັ້ງ, ປົດຕຳແໜ່ງ, ຍົກຍ້າຍ, ສັບຊ້ອນໝູນວຽນ ເຈົ້າໜ້າທີ່ພາສີ ປະຈຳດ່ານທ້ອງຖິ່ນ ແລະ ແຕ່ງຕັ້ງ, ຍົກຍ້າຍ, ປົດຕຳແໜ່ງ ເຈົ້າໜ້າທີ່ພາສີ ປະຈຳດ່ານປະເພນີ;
4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍ ຂອງກະຊວງການເງິນ ແລະ ອົງການປົກຄອງທ້ອງຖິ່ນ.

## ໝວດທີ 3
## ຂະແໜງກະສິກຳ ແລະ ປ່າໄມ້

**ມາດຕາ 61 ສິດ ແລະ ໜ້າທີ່ ຂອງກະຊວງກະສິກຳ-ປ່າໄມ້**

ກະຊວງກະສິກຳ-ປ່າໄມ້ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເປັນເສນາທິການໃຫ້ລັດຖະບານ ໃນການຄົ້ນຄວ້າ ແລະ ສະເໜີ ນະໂຍບາຍ, ນິຕິກຳ ແລະ ແຜນຍຸດທະສາດ ກ່ຽວກັບວຽກງານກັກກັນ ພືດ ແລະ ສັດ ໃນແຕ່ລະໄລຍະ;

2. ຄົ້ນຄວ້າ ແລະ ກຳນົດ ມາດຕະການ, ລະບຽບການ, ຄູ່ມືປະຕິບັດ ແລະ ຄຳແນະນຳດ້ານວິຊາການ ໃນການກວດກາການກັກກັນພືດ ແລະ ສັດ ຢູ່ດ່ານຊາຍແດນ;
3. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ເຈົ້າໜ້າທີ່ກັກກັນພືດ ແລະ ສັດ ປະຈຳດ່ານສາກົນ;
4. ພັດທະນາລະບົບການເກັບກຳຂໍ້ມູນ, ວິເຄາະ ແລະ ເຜີຍແຜ່ຂໍ້ມູນກ່ຽວກັບກັກກັນພືດ ແລະ ສັດ;
5. ຮ່ວມມື ແລະ ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການພັດທະນາດ່ານ, ການສ້າງຄວາມເຂັ້ມແຂງໃຫ້ແກ່ການກວດກາ, ການເຝົ້າລະວັງຄວາມສ່ຽງ, ການຄວບຄຸມການເຄື່ອນຍ້າຍ, ການສ້າງລະຖານທີ່ກັກກັນພືດ ແລະ ສັດ ໃຫ້ຖືກຕ້ອງ, ປອດໄພ, ວ່ອງໄວ ແລະ ທັນສະໄໝ;
6. ຄົ້ນຄວ້າ ກຳນົດ ແລະ ອອກນິຕິກຳ ລະອຽດ ກ່ຽວກັບການແບ່ງຂັ້ນຄຸ້ມຄອງ ຂອງຂະແໜງກະສິກຳ ແລະ ປ່າໄມ້ ໃນວຽກງານກັກກັນພືດ ແລະ ສັດ ຢູ່ດ່ານ.

**ມາດຕາ 62 ສິດ ແລະ ໜ້າທີ່ ຂອງພະແນກກະສິກຳ-ປ່າໄມ້ ຂັ້ນແຂວງ ແລະ ຫ້ອງການກະສິກຳ-ປ່າໄມ້ ຂັ້ນເມືອງ**

ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ແລະ ຫ້ອງການກະສິກຳ-ປ່າໄມ້ ຂັ້ນເມືອງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍ ນະໂຍບາຍ, ນິຕິກຳ ແລະ ແຜນຍຸດທະສາດ ກ່ຽວກັບວຽກງານກັກກັນພືດ ແລະ ສັດ ໃນຄວາມຮັບຜິດຊອບ ຂອງຕົນ;
2. ຄົ້ນຄວ້າ ສະເໜີ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ເຈົ້າໜ້າທີ່ກັກກັນພືດ ແລະ ສັດ ປະຈຳດ່ານທ້ອງຖິ່ນ ກໍລະນີມີຄວາມຈຳເປັນ;
3. ຈັດຕັ້ງປະຕິບັດ ວຽກງານຄຸ້ມຄອງບໍລິຫານ ແລະ ບໍລິການຢູ່ດ່ານ ຕາມການມອບໝາຍ ຂອງກະຊວງກະສິກຳ ແລະ ປ່າໄມ້ ແລະ ອົງການປົກຄອງທ້ອງຖິ່ນ.

## ໝວດທີ 4
## ຂະແໜງສາທາລະນະສຸກ

**ມາດຕາ 63 ສິດ ແລະ ໜ້າທີ່ ຂອງກະຊວງສາທາລະນະສຸກ**

ກະຊວງສາທາລະນະສຸກ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເປັນເສນາທິການໃຫ້ລັດຖະບານ ໃນການຄົ້ນຄວ້າ ແລະ ສະເໜີ ນະໂຍບາຍ, ນິຕິກຳ, ແຜນຍຸດທະສາດ ກ່ຽວກັບວຽກງານກວດກາອາຫານ, ຢາ ແລະ ຜະລິດຕະພັນການແພດ, ວຽກງານກັນ ແລະ ຄວບຄຸມພະຍາດຕິດຕໍ່ ໃນແຕ່ລະໄລຍະ;
2. ເປັນເຈົ້າການຄົ້ນຄວ້າ ແລະ ກຳນົດ ມາດຕະການ, ລະບຽບການ, ຄູ່ມືປະຕິບັດ ແລະ ຄຳແນະນຳດ້ານ ວິຊາການ ໃນວຽກງານກວດກາອາຫານ, ຢາ ແລະ ຜະລິດຕະພັນການແພດ, ວຽກງານກັນ ແລະ ຄວບຄຸມພະຍາດຕິດຕໍ່ ຢູ່ດ່ານ;
3. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງເຈົ້າໜ້າທີ່ກວດກາອາຫານ, ຢາ-ຜະລິດຕະພັນການແພດ ແລະ ຄວບຄຸມພະຍາດຕິດຕໍ່ ປະຈຳດ່ານສາກົນ;
4. ພັດທະນາລະບົບການເກັບກຳຂໍ້ມູນ, ວິເຄາະ ແລະ ເຜີຍແຜ່ຂໍ້ມູນກ່ຽວກັບກວດກາອາຫານ, ຢາ ແລະ ຜະລິດຕະພັນການແພດ, ການກັນ ແລະ ຄວບຄຸມພະຍາດຕິດຕໍ່ ຢູ່ດ່ານ;
5. ຮ່ວມມື ແລະ ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການພັດທະນາດ່ານ, ການສ້າງຄວາມເຂັ້ມແຂງ ໃຫ້ແກ່ວຽກງານກວດກາອາຫານ, ຢາ ແລະ ຜະລິດຕະພັນການແພດ, ວຽກງານກັນ ແລະ ຄວບ

ຄຸມພະຍາດຕິດຕໍ່ ເພື່ອອໍານວຍຄວາມສະດວກໃນການສົ່ງອອກ, ນໍາເຂົ້າ ແລະ ສົ່ງຜ່ານ ອາຫານ, ຢາ ແລະ ຜະລິດຕະພັນການແພດ ໃຫ້ຖືກຕ້ອງ, ປອດໄພ, ວ່ອງໄວ ແລະ ທັນສະໄໝ;

6. ຄົ້ນຄວ້າ ກໍານົດ ແລະ ມີນິຕິກໍາ ລະອຽດ ກ່ຽວກັບການແບ່ງຂັ້ນຄຸ້ມຄອງ ຂອງຂະແໜງສາທາລະນະສຸກ ໃນວຽກງານກວດກາອາຫານ, ຢາ ແລະ ຜະລິດຕະພັນການແພດ, ວຽກງານການກັນ ແລະ ຄວບຄຸມພະຍາດຕິດຕໍ່ ຢູ່ດ່ານເຂົ້າ-ອອກ ສປປ ລາວ.

**ມາດຕາ 64 ສິດ ແລະ ໜ້າທີ່ ຂອງພະແນກສາທາລະນະສຸກ ຂັ້ນແຂວງ**

ພະແນກສາທາລະນະສຸກ ຂັ້ນແຂວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄຸ້ມຄອງ, ຊີ້ນໍາ, ນໍາພາ, ຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກການ ກວດກາອາຫານ, ຢາ ແລະ ຜະລິດຕະພັນການແພດ; ວຽກງານການກັນ ແລະ ຄວບຄຸມພະຍາດຕິດຕໍ່ ປະຈໍາດ່ານຂັ້ນແຂວງ;
2. ສ້າງເງື່ອນໄຂອໍານວຍຄວາມສະດວກໃຫ້ແກ່ການປະຕິບັດວຽກງານກວດກາອາຫານ, ຢາ ແລະ ຜະລິດຕະພັນການແພດ ແລະ ວຽກງານການກັນ ແລະ ຄວບຄຸມພະຍາດຕິດຕໍ່;
3. ຮ່ວມມື, ປະສານງານ ແລະ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການພັດທະນາດ່ານ, ການສ້າງຄວາມເຂັ້ມແຂງ ໃຫ້ແກ່ວຽກງານກວດກາອາຫານ, ຢາ ແລະ ຜະລິດຕະພັນການແພດ ແລະ ວຽກງານການກັນ ແລະ ຄວບຄຸມພະຍາດຕິດຕໍ່ ເພື່ອອໍານວຍຄວາມສະດວກໃນການສົ່ງອອກ-ນໍາເຂົ້າ, ສົ່ງຜ່ານ ອາຫານ, ຢາ ແລະ ຜະລິດຕະ ພັນການແພດ ໃຫ້ມີຄວາມວ່ອງໄວ, ທັນສະໄໝ ແລະ ຮັບປະກັນຄວາມປອດໄພ ຕາມຫຼັກການສາກົນດ້ານສາທາລະນະສຸກ;
4. ສະເໜີເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ແຕ່ງຕັ້ງ, ຍົກຍ້າຍ, ກໍາດໍາແໜ່ງ ເຈົ້າໜ້າທີ່ ກວດກາອາຫານ, ຢາ ແລະ ຜະລິດຕະພັນການແພດ, ກັນ ແລະ ຄວບຄຸມພະຍາດຕິດຕໍ່ ປະຈໍາຢູ່ດ່ານທ້ອງຖິ່ນ ກໍລະນີມີຄວາມຈໍາເປັນ;
5. ສະຫຼຸບ ລາຍງານ ການຈັດຕັ້ງປະຕິບັດວຽກງານກວດກາອາຫານ, ຢາ ແລະ ຜະລິດຕະພັນການແພດ ແລະ ວຽກງານການກັນ ແລະ ຄວບຄຸມພະຍາດຕິດຕໍ່ ໃຫ້ຂັ້ນເທິງ ຢ່າງເປັນປົກກະຕິ;
6. ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງກະຊວງສາທາລະນະສຸກ ແລະ ອົງການປົກຄອງທ້ອງຖິ່ນ.

**ມາດຕາ 65 ສິດ ແລະ ໜ້າທີ່ ຂອງຫ້ອງການສາທາລະນະສຸກ ຂັ້ນເມືອງ**

ຫ້ອງການສາທາລະນະສຸກ ຂັ້ນເມືອງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຕິດຕາມ ກວດກາ ຊຸກຍູ້ ການປະຕິບັດໜ້າທີ່ ຂອງຜູ້ຮັບຜິດຊອບກວດກາອາຫານ, ຢາ ແລະ ຜະລິດຕະພັນການແພດ ແລະ ການກັນ ແລະ ຄວບຄຸມພະຍາດຕິດຕໍ່ ຢູ່ດ່ານປະເພນີ;
2. ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍ ຂອງພະແນກສາທາລະນະສຸກ ຂັ້ນແຂວງ ແລະ ອົງການປົກຄອງຂັ້ນເມືອງ.

## ໝວດທີ 5
## ຂະແໜງການຕ່າງປະເທດ

**ມາດຕາ 66 ສິດ ແລະ ໜ້າທີ່ ຂອງກະຊວງການຕ່າງປະເທດ**

ກະຊວງການຕ່າງປະເທດ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ປະສານງານ ກັບບັນດາຂະແໜງການທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ຄົ້ນຄວ້າ ສ້າງແຜນຍຸດທະສາດພັດທະນາວຽກງານດ່ານໃນຂອບເຂດທົ່ວປະເທດ ລາຍງານລັດຖະບານ ເພື່ອພິຈາລະນາຕົກລົງ;

2. ປະສານງານ ກັບບັນດາຂະແໜງການທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ສ້າງເອກະສານບົດວິພາກເສດຖະກິດ ໃນການສະເໜີຂໍສ້າງຕັ້ງດ່ານ ຂອງ ສປປ ລາວ;
3. ຄົ້ນຄວ້າ ຕົກລົງ ການອະນຸມັດສ້າງຕັ້ງພາກສ່ວນຮັບຜິດຊອບວຽກງານພົວພັນຊາຍແດນ ແລະ ວຽກງານກົງສູນ ຢູ່ດ່ານເຂົ້າ-ອອກ ສປປ ລາວ, ພ້ອມທັງແຕ່ງຕັ້ງ, ຍົກຍ້າຍ ແລະ ປົດຕໍາແໜ່ງ ພະນັກງານໄປປະຈໍາຢູ່ແຕ່ລະດ່ານສາກົນ;
4. ຄົ້ນຄວ້າ ການສະເໜີ ຂອງແຂວງ, ນະຄອນຫຼວງ ໃນການປິດການເຄື່ອນໄຫວຊົ່ວຄາວ ຂອງດ່ານສາກົນ ຫຼື ການສະເໜີຍຸບເລີກດ່ານສາກົນ ເພື່ອນໍາສະເໜີລັດຖະບານ ພິຈາລະນາຕົກລົງ;
5. ຄົ້ນຄວ້ານິຕິກໍາ ກ່ຽວກັບການຄຸ້ມຄອງຊາຍແດນ ແລະ ຊີ້ນໍາການຈັດຕັ້ງປະຕິບັດວຽກງານພົວພັນຊາຍແດນ ຢູ່ແຕ່ລະດ່ານ.

**ມາດຕາ 67 ສິດ ແລະ ໜ້າທີ່ ຂອງພະແນກການຕ່າງປະເທດ ຂັ້ນແຂວງ**

ພະແນກການຕ່າງປະເທດ ຂັ້ນແຂວງ ມີສິດ ແລະ ໜ້າທີ່ ຕາມການມອບໝາຍ ຂອງກະຊວງການຕ່າງປະເທດ ໃນການຈັດຕັ້ງປະຕິບັດ ວຽກງານການພົວພັນສາກົນ, ວຽກງານຊາຍແດນ ແລະ ວຽກງານກົງສູນຢູ່ດ່ານ.

## ໝວດທີ 6
## ຂະແໜງໂຍທາທິການ ແລະ ຂົນສົ່ງ ແລະ ຂະແໜງປ້ອງກັນປະເທດ

**ມາດຕາ 68 ສິດ ແລະ ໜ້າທີ່ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ**

ກະຊວງໂຍທາທິການ ແລະ ຂົນສົ່ງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄຸ້ມຄອງການ ສໍາຫຼວດ, ອອກແບບ, ກໍ່ສ້າງ, ສ້ອມແປງ ແລະ ບູລະນະຮັກສາຂົວ, ອາຄານ, ຖະໜົນ, ລານຈອດລົດ ແລະ ສິ່ງອໍານວຍຄວາມສະດວກຕ່າງໆພາຍໃນດ່ານ;
2. ຄົ້ນຄ້ວາ ວິທີການ ແລະ ມາດຕະການ, ປະສານສົມທົບ, ຕິດຕາມ ແລະ ຊຸກຍູ້ ແກ້ໄຂບັນຫາຕ່າງໆ ທີ່ເປັນອຸປະສັກໃຫ້ແກ່ການຂົນສົ່ງ ເພື່ອອໍານວຍຄວາມສະດວກການຂົນສົ່ງທຸກປະເພດໃຫ້ມີຄວາມວ່ອງໄວ, ປອດໄພ, ມີປະສິດທິພາບ, ປະສິດທິຜົນ ແລະ ເຊື່ອມໂຍງເຂົ້າກັບລະບົບການຂົນສົ່ງຂອງອາຊຽນ, ພາກພື້ນ ແລະ ສາກົນ;
3. ກວດກາ ແລະ ປັບປຸງຄືນ ໂຄງລ່າງພື້ນຖານ ຂອງບັນດາດ່ານ ທີ່ໄດ້ສ້າງຕັ້ງຂຶ້ນກ່ອນ ໃຫ້ໄດ້ຕາມມາດຕະຖານເງື່ອນໄຂ ທີ່ລະບຸໄວ້ໃນດໍາລັດ ສະບັບນີ້.

**ມາດຕາ 69 ສິດ ແລະ ໜ້າທີ່ ຂອງກະຊວງປ້ອງກັນປະເທດ**

ກະຊວງປ້ອງກັນປະເທດ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ພົວພັນກັບກໍາລັງປ້ອງກັນຊາຍແດນ ຂອງບັນດາປະເທດໃກ້ຄຽງ ເພື່ອຈັດຕັ້ງປະຕິບັດສົນທິສັນຍາ, ສັນຍາສາກົນ ແລະ ຂໍ້ຕົກລົງ ກ່ຽວກັບຊາຍແດນ, ແລກປ່ຽນສະພາບການ ແລະ ແກ້ໄຂກໍລະນີຕ່າງໆ ທີ່ເກີດຂຶ້ນຕາມການມອບໝາຍ ຂອງຂັ້ນເທິງ;
2. ປະສານສົມທົບກັບ ກໍາລັງປ້ອງກັນຄວາມສະຫງົບ, ບັນດາຂະແໜງການຄຸ້ມຄອງລັດ, ບັນດາຫົວໜ່ວຍທຸລະກິດ ທີ່ຢູ່ຂອບເຂດດ່ານ ເພື່ອຮ່ວມເກັບກໍາຂໍ້ມູນ ຂ່າວສານທີ່ຈໍາເປັນ ກ່ຽວກັບວຽກງານປົກປັກຮັກສາ ແລະ ຄຸ້ມຄອງຊາຍແດນ;

3. ສົມທົບກັບ ກຳລັງປ້ອງກັນຄວາມສະຫງົບປະຈຳຢູ່ດ່ານ ໃນການຄຸ້ມຄອງ ແລະ ກວດກາການເຂົ້າ-ອອກ ຂອງພົນລະເມືອງລາວ ແລະ ຊາວຕ່າງປະເທດຢູ່ຕາມດ່ານ ແນໃສ່ຮັກສາຄວາມສະຫງົບປອດໄພ ໃຫ້ແກ່ເສັ້ນຊາຍແດນ;
4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 7
## ອົງການປົກຄອງທ້ອງຖິ່ນ

### ມາດຕາ 70 ອົງການປົກຄອງທ້ອງຖິ່ນ

ອົງການປົກຄອງທ້ອງຖິ່ນ ປະກອບມີ:
1. ແຂວງ, ນະຄອນຫຼວງ ທີ່ມີດ່ານ ຕັ້ງຢູ່;
2. ເມືອງ, ເທດສະບານ, ນະຄອນ ທີ່ມີດ່ານ ຕັ້ງຢູ່.

### ມາດຕາ 71 ສິດ ແລະ ໜ້າທີ່ ຂອງແຂວງ, ນະຄອນຫຼວງ ທີ່ມີດ່ານຕັ້ງຢູ່

ແຂວງ, ນະຄອນຫຼວງ ທີ່ມີດ່ານຕັ້ງຢູ່ ມີສິດ ແລະ ໜ້າທີ່ ດັ່ງນີ້:
1. ຊີ້ນຳ, ຊຸກຍູ້, ຕິດຕາມ, ກວດກາ ແລະ ອຳນວຍຄວາມສະດວກ ໃຫ້ບັນດາດ່ານທີ່ຕັ້ງຢູ່ ແຂວງ ແລະ ນະຄອນຫຼວງ ຕາມກົດໝາຍ, ລະບຽບການ ແລະ ພາລະບົດບາດ ຂອງຕົນ;
2. ຄົ້ນຄວ້າ ສະເໜີ ລັດຖະບານ ໂດຍຜ່ານກະຊວງການຕ່າງປະເທດ ເພື່ອຂໍສ້າງຕັ້ງ, ຍົກລະດັບ, ຫຼຸດລະດັບ ຫຼື ຍຸບເລີກດ່ານ ທີ່ຕັ້ງຢູ່ໃນທ້ອງຖິ່ນ ຂອງຕົນ;
3. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຫົວໜ້າ, ຮອງຫົວໜ້າຄະນະຄຸ້ມຄອງດ່ານສາກົນ; ຫົວໜ້າ, ຮອງຫົວໜ້າຫ້ອງການ ແລະ ວິຊາການ ບໍລິຫານ ດ່ານສາກົນ;
4. ລາຍງານ ການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງດ່ານໃນແຕ່ລະໄລຍະ ໃຫ້ລັດຖະບານ ຢ່າງເປັນປົກກະຕິ;
5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

### ມາດຕາ 72 ສິດ ແລະ ໜ້າທີ່ ຂອງເມືອງ, ເທດສະບານ, ນະຄອນ ທີ່ມີດ່ານຕັ້ງຢູ່

ເມືອງ, ເທດສະບານ, ນະຄອນ ທີ່ມີດ່ານຕັ້ງຢູ່ ມີສິດ ແລະ ໜ້າທີ່ ດັ່ງນີ້:
1. ຊີ້ນຳ, ຊຸກຍູ້, ຕິດຕາມ, ກວດກາ ແລະ ອຳນວຍຄວາມສະດວກ ໃຫ້ດ່ານທ້ອງຖິ່ນ ແລະ ດ່ານປະເພນີ ທີ່ຕັ້ງຢູ່ເມືອງ, ເທດສະບານ, ນະຄອນ ຂອງຕົນ ໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງດ່ານ ຕາມກົດໝາຍ, ລະບຽບການ ແລະ ພາລະບົດບາດ;
2. ແຕ່ງຕັ້ງ, ຍົກຍ້າຍ, ປົດຕຳແໜ່ງ ຫົວໜ້າ, ຮອງຫົວໜ້າຄະນະຄຸ້ມຄອງດ່ານທ້ອງຖິ່ນ; ຫົວໜ້າ, ຮອງຫົວໜ້າໜ່ວຍງານ ແລະ ວິຊາການ ບໍລິຫານ ດ່ານທ້ອງຖິ່ນ; ຫົວໜ້າຄະນະຄຸ້ມຄອງດ່ານປະເພນີ;
3. ລາຍງານ ການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງດ່ານ ໃນແຕ່ລະໄລຍະ ໃຫ້ແຂວງ ຫຼື ນະຄອນຫຼວງ ຢ່າງເປັນປົກກະຕິ;
4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 8
## ການກວດກາ ວຽກງານດ່ານເຂົ້າ-ອອກ ສປປ ລາວ

### ມາດຕາ 73 ອົງການກວດກາວຽກງານດ່ານເຂົ້າ-ອອກ ສປປ ລາວ

ອົງການກວດກາ ວຽກງານດ່ານ ປະກອບດ້ວຍ:

1. ອົງການກວດກາພາຍໃນ ແມ່ນອົງການຄູ່ກັບອົງການຄຸ້ມຄອງດ່ານ ຕາມທີ່ກຳນົດໄວ້ໃນກົດໝາຍສະບັບນີ້.
2. ອົງການກວດກາພາຍນອກ ແມ່ນສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດສອບແຫ່ງລັດ, ອົງການກວດກາແຫ່ງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ສື່ມວນຊົນ ແລະ ພົນລະເມືອງ.

### ມາດຕາ 74 ເນື້ອໃນການກວດກາ

ການກວດກາວຽກງານດ່ານເຂົ້າ-ອອກ ສປປ ລາວ ມີເນື້ອໃນ ຕົ້ນຕໍ ດັ່ງນີ້:

1. ການປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານດ່ານເຂົ້າ-ອອກ ສປປ ລາວ;
2. ການປະຕິບັດໜ້າທີ່ ຂອງພະນັກງານ-ລັດຖະກອນ.

### ມາດຕາ 75 ຮູບການການກວດກາ

ການກວດກາ ມີຮູບການ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ;
2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ;
3. ການກວດກາແບບສຸກເສີນ.

ການກວດກາຕາມລະບົບປົກກະຕິ ແມ່ນ ການກວດກາທີ່ດຳເນີນໄປຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ.

ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນການກວດການອກແຜນ ເມື່ອເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ລ່ວງໜ້າ.

ການກວດກາແບບສຸກເສີນ ແມ່ນ ການກວດກາແບບຮີບດ່ວນ ໂດຍທີ່ບໍ່ໄດ້ແຈ້ງໃຫ້ເປົ້າໝາຍຖືກກວດກາ ຮູ້ລ່ວງໜ້າ.

## ພາກທີ IX
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 76 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ຈະໄດ້ ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການ.

### ມາດຕາ 77 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້ ກ່ຽວກັບການຄຸ້ມຄອງດ່ານເຂົ້າ-ອອກ ສປປ ລາວ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ປັບໃໝ, ລົງວິໄນ, ດຳເນີນຄະດີທາງແພ່ງ ຫຼື ທາງອາຍາ ຕາມກໍລະນີເບົາ ຫຼື ໜັກ.

**ມາດຕາ 78 ມາດຕະການຕໍ່ພະນັກງານ ແລະ ເຈົ້າໜ້າທີ່ປະຈຳດ່ານເຂົ້າ-ອອກ ສປປ ລາວ**

ພະນັກງານ ແລະ ເຈົ້າໜ້າທີ່ປະຈຳດ່ານ ທີ່ຮັບຜິດຊອບວຽກງານຄຸ້ມຄອງດ່ານເຂົ້າ-ອອກ ສປປ ລາວ ທີ່ລະເມີດຂໍ້ຫ້າມ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້ ແລະ ລະບຽບການອື່ນ ກ່ຽວກັບວຽກງານຄຸ້ມຄອງດ່ານເຂົ້າ-ອອກ ສປປ ລາວ ຈະຖືກປະຕິບັດມາດຕະການ ຕາມແຕ່ ລະກໍລະນີ ດັ່ງນີ້:

1. ສຶກສາອົບຮົມ ແລະ ກ່າວເຕືອນ ໃນກໍລະນີລະເມີດ ດຳລັດສະບັບນີ້ ແລະ ລະບຽບການອື່ນກ່ຽວຂ້ອງ ທີ່ບໍ່ຮ້າຍແຮງ ຫຼື ບໍ່ເປັນການກະທຳຜິດທາງອາຍາ;
2. ລົງວິໄນ ໃນກໍລະນີລະເມີດດຳລັດ ສະບັບນີ້ ແລະ ລະບຽບການອື່ນກ່ຽວຂ້ອງ ທີ່ບໍ່ຮ້າຍແຮງ, ສ້າງຄວາມເສຍຫາຍບໍ່ຫຼວງຫຼາຍ ແລະ ບໍ່ເປັນການກະທຳຜິດທາງອາຍາ;
3. ໃຊ້ແທນຄ່າເສຍຫາຍ ແລະ ຖືກດຳເນີນຄະດີ ໃນກໍລະນີເບົາ ຫຼື ໜັກ, ໃນກໍລະນີບໍ່ມີຄວາມຮັບຜິດຊອບ ຫຼື ເມີນເສີຍຕໍ່ໜ້າທີ່ ຂອງຕົນ ຊຶ່ງສ້າງຄວາມເສຍຫາຍ ຕໍ່ຜົນປະໂຫຍດຂອງບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ລັດ.

## ພາກທີ X
## ບົດບັນຍັດສຸດທ້າຍ

**ມາດຕາ 79 ງົບປະມານ ແລະ ຕາປະທັບ**

ຄະນະຄຸ້ມຄອງດ່ານສາກົນ ແລະ ຄະນະຄຸ້ມຄອງດ່ານທ້ອງຖິ່ນ ມີງົບປະມານ ແລະ ຕາປະທັບ ເປັນຂອງຕົນເອງ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ສຳລັບຂະແໜງການວິຊາສະເພາະ ມີຕາປະທັບ ເປັນຂອງຕົນເອງ ຕາມການກຳນົດ ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 80 ເຄື່ອງແບບ, ເຄື່ອງໝາຍ, ບັດ ຂອງພະນັກງານ ແລະ ເຈົ້າໜ້າທີ່ ປະຈຳດ່ານເຂົ້າ-ອອກ ສປປ ລາວ**

ໃນເວລາປະຕິບັດໜ້າທີ່ວຽກງານ ພະນັກງານ ແລະ ເຈົ້າໜ້າທີ່ປະຈຳດ່ານ ຕ້ອງໃສ່ເຄື່ອງແບບ, ກາໝາຍ, ປ້າຍຊື່, ບັດພະນັກງານ ຕາມທີ່ກຳນົດໄວ້ໃນລະບຽບການ ຂອງຂະແໜງການຕົນ.

**ມາດຕາ 81 ການຜັນຂະຫຍາຍ**

ມອບໃຫ້ ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ຜັນຂະຫຍາຍ ເປັນນິຕິກຳລະອຽດ ຂອງຕົນ ແລະ ມອບໃຫ້ອົງການປົກຄອງທ້ອງຖິ່ນ ເປັນຜູ້ອອກຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະຄຸ້ມຄອງດ່ານ ຕາມທີ່ກຳນົດໃນດຳລັດ ສະບັບນີ້.

**ມາດຕາ 82 ການຈັດຕັ້ງປະຕິບັດ**

ມອບໃຫ້ກະຊວງພາຍໃນ ເປັນເຈົ້າການສົມທົບກັບ ບັນດາຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ບ່ອນທີ່ດ່ານຕັ້ງຢູ່ ປັບປຸງກົງຈັກການຈັດຕັ້ງ ແລະ ບຸກຄະລາກອນ ຂອງບັນດາດ່ານໃຫ້ສຳເລັດ. ພ້ອມທັງ ຊຸກຍູ້, ຕິດຕາມ ແລະ ປະເມີນການຈັດຕັ້ງປະຕິບັດດຳລັດ ສະບັບນີ້ ໃຫ້ໄດ້ຮັບຜົນດີ.

ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

ມາດຕາ 83 ຜົນສັກສິດ

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນດຳລັດວ່າດ້ວຍດ່ານຊາຍແດນ ແລະ ສະໜາມບິນສາກົນ ສະບັບເລກທີ 558/ລບ, ລົງວັນທີ 31 ທັນວາ 2018.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ລັດຖະບານ ແຫ່ງ ສປປ ລາວ
ນາຍົກລັດຖະມົນຕີ

ສອນໄຊ ສີພັນດອນ